ກະຊວງກະສິກຳ ແລະ ປ່າໄມ້

ສະຖາບັນຄົ້ນຄ້ວາ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ

# ບົດສະເໜີຄົ້ນຄ້ວາ

## ສຶກສາການນຳໃຊ້ເຕັກນິກການປູກສາລີ
## ບ້ານ ຫ້ວຍມັນ ແລະ ບ້ານ ທ່າໂພ, ເມືອງໂພນໄຊ, ແຂວງຫລວງພະບາງ




ທ. ບຸນທະວີ ໄຊຊົມພູ

ທ. ພອນປະເສີດ ສຸວັນນະວົງ

ນ. ກອງມີ ສີມຸກດາ



ໂຄງການຍ່ອຍຄົ້ນຄ້ວາ ເສດຖະກິດ-ສັງຄົມ

ໂຄງການຄົ້ນຄ້ວາ ກະສິກຳ ແລະ ປ່າໄມ້ ເຂດພູດອຍຮ່ວມມື ລາວ-ຊູແອດ

ເມສາ, 2007

# ສາລະບານ


ບົດຄັດຫຍໍ້.....i
ຄຳຂອບໃຈ.....ii
1. ພາກສະເໜີ.....1
1.1. ປະຫວັດຄວາມເປັນມາ.....1
1.2. ຈຸດປະສົງ.....2
1.3. ຄຳຖາມຄົ້ນຄ້ວາ.....3
2. ລັກສະນະຂອງເຂດສຶກສາ.....3
2.1. ອຸນຫະພູມ ແລະ ປະລິມານນ້ຳຝົນ.....3
2.2. ລັກສະນະຂອງດິນ.....3
2.3. ລັກສະນະທາງສັງຄົມ.....3
3. ຄວາມສຳຄັນ ແລະ ການຕະຫລາດສາລີ ເມືອງໂພນໄຊ.....5
3.1 ຄວາມສຳຄັນ ແລະ ຄຸນປະໂຫຍດຂອງສາລີ.....5
3.2 ສະພາບການຕະຫລາດຂອງສາລີເຂດເມືອງໂພນໄຊ.....5
4. ກິດຈະກຳການປູກສາລີ.....6
4.1 ເນື້ອທີ່ການປູກສາລີ.....7
4.2 ແຮງງານ.....7
4.3 ຜົນຜະລິດ.....8
4.4 ລາຍຮັບທັງໝົດ.....9
4.5 ລາຍຮັບຈາກສາລີ ປີ 2005.....11
4.6 ຈຳນວນການເພີ່ມຂຶ້ນຂອງສັດລ້ຽງຂອງທັງສອງພາກສ່ວນ.....12
5. ເທັກນິກການຜະລິດ.....14
5.1. ແນວພັນສາລີ.....14
5.2. ໄລຍະຫ່າງການປູກ.....15
5.3. ການບົວລະບັດ.....15
6. ບັນຫາ ແລະ ອຸປະສັກໃນການປູກສາລີ.....16
6.1. ສັດຕູພືດ ແລະ ແມງໄມ້.....16
6.2. ແຮງງານ.....16
6.3. ຂໍ້ມູນຂ່າວສານດ້ານການຕະຫລາດ.....16
6.4. ເທັກນິກຫລັງເກັບກ່ຽວ.....17
6.5. ອຸປະສັກອື່ນໆ.....17
7. ສະຫຼຸບ ແລະ ຂໍ້ສະເໜີແນະ.....17
7. 1 ສະຫລຸບ.....17
7. 2 ຂໍ້ສະເໜີແນະ.....19

# ບົດຄັດຫຍໍ້


ໃນການປັບປຸງ ແລະ ເພີ່ມຜົນຜະລິດນັ້ນ ຈຳເປັນຕ້ອງໄດ້ປັບປຸງເທັກນິກການຜະລິດກະສິກຳໄປພ້ອມ ເພື່ອຍົກຜົນຜະລິດຂຶ້ນເທື່ອລະກ້າວ ແລະ ເສີມສ້າງລາຍຮັບໃຫ້ແກ່ຄອບຄົວ ມີຄວາມຈຳເປັນ ທີ່ຕ້ອງໄດ້ສຶກສາໃຫ້ຮູ້ລະອຽດ ເຖິງສະພາບການນຳໃຊ້ເທັກນິກການຜະລິດ ແລະ ຜົນກະທົບຂອງເທັກນິກຕ່າງໆ ຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນ. ກໍລະນີສຶກສານີ້ ໄດ້ສຸມໃສ່ເຂດຈຸດສຸມຂອງໂຄງການ ຄົ້ນຄ້ວາ ກະສິກຳ ແລະ ປ່າໄມ້ ເຂດພູດອຍຮ່ວມມືລາວ-ຊູແອັດ (LSUAFRP) ໂດຍສະເພາະແມ່ນ ບ້ານຫ້ວຍມັນ ແລະ ບ້ານທ່າໂພ, ໂຄງການ LSUAFRP ຊຶ່ງໄດ້ຈັດຕັ້ງປະຕິບັດມາແຕ່ປີ 2002 ເປັນຕົ້ນມາ. ການສຶກສາຄັ້ງນີ້ ແມ່ນໄດ້ເປັນຕົວຊີ້ບອກເຖິງຜົນສຳເລັດໃນການຄົ້ນຄວ້າທົດລອງ, ສືບຕໍ່ດຳເນີນການຄົ້ນຄ້ວາທົດລອງ ໃນການດຳເນີນກິດຈະກຳການທົດລອງ ປົກສາຫາລື ຮ່ວມກັບຊາວກະສິກອນ.

ການສຶກສາໃນຄັ້ງນີ້ ໄດ້ເກັບກຳຂໍ້ມູນທາງປະລິມານ ແລະ ຄຸນນະພາບຈາກຫລາຍແຫລ່ງຂໍ້ມູນ ເພື່ອເປັນການຢັ້ງຢືນ ແລະ ເຮັດໃຫ້ຜົນຂອງການສຶກສາອຸດົມສົມບູນ. ການເກັບກຳຂໍ້ມູນພາກສະໜາມ ແມ່ນໄດ້ເນັ້ນໃສ່ກໍລະນີສຶກສາ ຂອງບ້ານຫ້ວຍມັນ ແລະ ບ້ານທ່າໂພ, ເມືອງ ໂພນໄຊ, ແຂວງຫລວງພະບາງ ປະມານ 50% ຂອງຫົວໜ້າຄອບຄົວ ໄດ້ເຂົ້າຮ່ວມໃນການສຳພາດ ແລະ ໄດ້ສົນທະນາຮ່ວມກັບນັກຄົ້ນຄ້ວາ ເພື່ອຈັດການສົນທະນາ, ໂດຍບໍ່ໄດ້ຈຳແນກ ກຸ່ມຂອງຊົນເຜົ່າ ຂຶ້ນກັບຈຳນວນຜູ້ທີ່ປູກສາລີ ລວມທັງໂຄງການ. ນອກນັ້ນ ພວກເຮົາໄດ້ສຳພາດ ຈຳນວນຄອບຄົວຜູ້ປູກສາລີຢູ່ນອກໂຄງການ, ເພື່ອສົມທຽບເຖິງສາເຫດຂອງການນຳໃຊ້ ບັນດາເທັກນິກ ແລະ ຜົນກະທົບ ຂອງໂຄງການທີ່ມີຕໍ່ກັບຊາວກະສິກອນ. ການສັງລວມຂໍ້ມູນ ແມ່ນໄດ້ນຳໃຊ້ການວິເຄາະແບບເຊີງປະລິມານ ແລະ ຄຸນນະພາບ. ໂດຍສະເພາະແມ່ນໄດ້ນຳໃຊ້ Microsoft Excel ໃນການວິເຄາະທາງດ້ານປະລິມານ.

ຜົນຂອງການສຶກສາຄັ້ງນີ້ ຈະສາມາດຮູ້ໄດ້ເຖິງການນຳໃຊ້ທາງດ້ານເທັກນິກການຜະລິດກະສິກຳແບບໃໝ່ ຕໍ່ກັບຊາວກະສິກອນ ແລະ ຮູບແບບການຜະລິດ ໂດຍນຳໃຊ້ເຕັກນິກຂອງຊາວກະສິກອນເອງ. ນອກນັ້ນ, ຮູ້ໄດ້ເຖິງຜົນກະທົບຂອງບັນດາກິດຈະກຳຕ່າງໆ ຕໍ່ກັບຊີວິດການເປັນຢູ່ຂອງເຂົາເຈົ້າ. ຂໍ້ມູນດັ່ງກ່າວ ຈະເປັນແນວທາງຂັ້ນພື້ນຖານ ໃຫ້ແກ່ນັກຄົ້ນຄ້ວາທົດລອງ, ເພື່ອປັບປຸງເທັກນິກການຜະລິດ, ຜັນຂະຫຍາຍ, ຊອກຫາເຕັກນິກທີ່ແທດເໝາະ ໃນການຜະລິດກັບຊາວກະສິກອນ ແລະ ເພື່ອເປັນການຢັ້ງຢືນວ່າ ການພັດທະນາເທັກນິກການຜະລິດຈະຕ້ອງໃຫ້ສອດຄ່ອງກັບສະພາບຕົວຈິງຂອງທ້ອງຖິ່ນ.

# ຄຳຂອບໃຈ

ບົດລາຍງານສະບັບນີ້ ກ່ອນຈະເກີດຂຶ້ນໄດ້ ແມ່ນຍ້ອນຫລາຍພາກສ່ວນ ໄດ້ໃຫ້ຄວາມຮ່ວມມືໃນການເຮັດບົດລາຍງານ. ສະນັ້ນ, ຂ້າພະເຈົ້າຂໍສະແດງຄວາມຂອບອົກຂອບໃຈມາຍັງ ພະນັກງານປະສານງານເມືອງໂພນໄຊ, ແຂວງຫລວງພະບາງ ທີ່ໄດ້ຊ່ວຍປະສານສົມທົບກັບປະຊາຊົນ ແລະ ເກັບກຳຂໍ້ມູນຊ່ວຍຂ້າພະເຈົ້າ ແລະ ຂໍຂອບໃຈມາຍັງອຳນາດການປົກຄອງທັງສອງບ້ານ ຄື: ບ້ານຫ້ວຍມັນ ແລະ ບ້ານທ່າໂພ ທີ່ໄດ້ເອົາໃຈໃສ່ປະສານງານກັບທີມງານຂອງຂ້າພະເຈົ້າ ໃນການເຕົ້າໂຮມຊາວບ້ານ ຕະຫລອດຮອດປະຊາຊົນທັງສອງບ້ານທີ່ໄດ້ເອົາໃຈໃສ່ ໃນການໃຫ້ຂໍ້ມູນ. ຂໍສະແດງຄວາມຮູ້ບຸນຄຸນມາຍັງໂຄງການ LSUAFRP ທີ່ໄດ້ໃຫ້ການຊ່ວຍເຫລືອທາງດ້ານທຶນຮອນເຂົ້າໃນການ ປະຕິບັດວຽກງານໃນຄັ້ງນີ້.

ຂໍສະແດງຄວມຂອບໃຈພິເສດມາຍັງ ທ່ານ ດຣ. ລິນຄຳ ດວງສະຫວັນ ຫົວໜ້າໜ່ວຍງານເສດຖະກິດ - ສັງຄົມ ແລະ ທ່ານ ດຣ. ຢາໂຢຍ ຟູຈິຕະ ຊ່ຽວຊານປະຈຳໂຄງການ ຄົ້ນຄ້ວາເສດຖະກິດ - ສັງຄົມ ທີ່ໄດ້ໃຫ້ຄຳແນະນຳຢ່າງໃກ້ສິດໃນການຂຽນບົດລາຍງານໃນຄັ້ງນີ້ໃຫ້ໄດ້ຮັບຜົນສຳເລັດດ້ວຍດີ.

# 1. ພາກສະເໜີ

## 1.1. ປະຫວັດຄວາມເປັນມາ

ໃນໄລຍະຜ່ານມາຊາວກະສິກອນໃນເຂດພູດອຍຂອງລາວ ໄດ້ທຳການຜະລິດແບບປະຖົມປະຖານເຊັ່ນ: ການຖາງປ່າເຮັດໄຮ່ແບບເລື່ອນລອຍ, ການລ້ຽງສັດແບບປ່ອຍຕາມທຳມະຊາດ, ການເກັບເຄື່ອງປ່າຂອງດົງ ໂດຍບໍ່ມີການຄຸ້ມຄອງແບບຍືນຍົງ. ສະນັ້ນ, ມັນຈຶ່ງເປັນສາເຫດທີ່ເຮັດໃຫ້ຊັບພະຍາກອນທຳມະຊາດ ນັບມື້ນັບເຊື່ອມໂຊມລົງ, ໂດຍສະເພາະ ແມ່ນເນື້ອທີ່ປ່າໄມ້ຫລຸດລົງ, ດິນເຊື່ອມຄຸນນະພາບ, ເຄື່ອງປ່າຂອງດົງ ມີແນວໂນ້ມສູນພັນ, ແມ່ນ້ຳລຳເຊຕື້ນເຂີນ, ໄພທຳມະຊາດເກີດຂື້ນເລື້ອຍ. ເພື່ອຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ກ່ຽວກັບການພັດທະນາກະສິກຳເຂດພູດອຍ ເພື່ອແນໃສ່ຫລຸດຜ່ອນຄວາມທຸກຈົນຂອງຊາວກະສິກອນ (ໂຄງການຍ່ອຍຄົ້ນຄ້ວາລະບົບການຜະລິດກະສິກຳ, 2006).

ນັບແຕ່ປີ 2002 ເປັນຕົ້ນມາ, ໂຄງການຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ເຂດພູດອຍ ຮ່ວມມືລາວ - ຊູແອດ (LSUAFRP) ແລະ ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ໄດ້ໝູນໃຊ້ທຸກຮູບແບບເຕັກນິກ ໂດຍສະເພາະການມີສ່ວນຮ່ວມຂອງຊາວກະສິກອນເພື່ອຫັນປ່ຽນເທັກນິກການປູກພືດຢູ່ເຂດເນີນສູງ. ເປັນຕົ້ນແມ່ນ ດ້ານການປູກພືດໄລຍະສັ້ນ ແລະ ການປູກພືດໄລຍະຍາວ ເພື່ອໃຫ້ປະຊາຊົນມີເຂົ້າກຸ້ມຢູ່-ກຸ້ມກິນ ແລະ ສ້າງລາຍຮັບເພີ່ມໃຫ້ແກ່ຄອບຄົວ. ໃນປະຈຸບັນ ຈຳນວນຄອບຄົວທີ່ນຳໃຊ້ເທັກນິກເຫລົ່ານັ້ນໄດ້ເພີ່ມຂື້ນຕາມລຳດັບ. ໂຄງການໄດ້ມີຜົນກະທົບຕໍ່ກັບຊີວິດການເປັນຢູ່ຂອງຄອບຄົວຊາວກະສິກອນເຂດເນີນສູງ ເຮັດໃຫ້ຊີວິດການເປັນຢູ່ໄດ້ຮັບການປັບປຸງ, ພວກເຮົາບໍ່ແນ່ໃຈວ່າ ໂຄງການຈະສາມາດປຸງຊີວິດການເປັນຢູ່ ຂອງຊາວກະສິກອນໄດ້ ຫລືຍັງ.

ການຍົກສະມັດທະພາບຂອງການຜະລິດເຮັດໃຫ້ມີການເສີມສ້າງລາຍຮັບໃຫ້ແກ່ອບຄົວ ແລະ ນຳໄປສູ່ການຫລຸດຜ່ອນຄວາມທຸກຈົນໃນເຂດພາກເໜືອຂອງລາວ. ເຖິງຢ່າງໃດກໍ່ຕາມ, ມີຄວາມຈຳເປັນທີ່ຕ້ອງໄດ້ສຶກສາໃຫ້ຮູ້ລະອຽດເຖິງ ສະພາບການນຳໃຊ້ເທັກນິກການຜະລິດ ແລະ ຜົນກະທົບຂອງເທັກນິກຕ່າງໆ ທີ່ທາງໂຄງການ LSUAFRP ໄດ້ດຳເນີນມາ ເພື່ອພັດທະນາຊີວິດການເປັນຢູ່ຂອງປະຊາຊົນໃນເຂດຈຸດສຸມໃນສອງແຂວງພາກເໜືອຂອງລາວເຊັ່ນ: ເມືອງໂພນໄຊ, ແຂວງຫລວງພະບາງ ແລະ ເມືອງນາໝໍ້, ແຂວງອຸດົມໄຊ.

ການສຶກສານີ້ ໄດ້ສົມທຽບກັບຊາວກະສິກອນຜູ້ເຂົ້າຮ່ວມ ແລະ ຜູ້ບໍ່ເຂົ້າຮ່ວມໂຄງການເພື່ອສົມທຽບຄວາມແຕກຕ່າງກັນ ໃນການຮັບເທັກນິກການປູກສາລີລະຫວ່າງຊົນເຜົ່າ ແລະ ຖານະຄອບຄົວທີ່ແຕກຕ່າງກັນ. ຜົນຂອງການສຶກສາຄັ້ງນີ້ ເປັນຕົວຊີ້ບອກຜົນສຳເລັດໃນການຄົ້ນຄວ້າທົດລອງສາລີ ຢູ່ເຂດເມືອງ ໂພນໄຊ ແລະ ຄວາມຈຳເປັນທີ່ຕ້ອງໄດ້ຊອກວິທີທາງໃໝ່ ໃນການດຳເນີນກິດຈະກຳການທົດລອງຮ່ວມກັບຊາວກະສິກອນໃນອະນາຄົດ. ການສຶກສາຄັ້ງນີ້ ໄດ້ສຸມໃສ່ບ້ານເປົ້າໝາຍຂອງໂຄງການ LSUAFRP ທີ່ມີຈຳນວນທັງໝົດ 5 ບ້ານ ໃນເຂດເມືອງໂພນໄຊ, ແຂວງ

ຫລວງພະບາງ. ໃນນັ້ນ, ໄດ້ເລືອກເອົາຈຳນວນ 2 ບ້ານ ທີ່ມີການປູກສາລີຫລາຍ ຄື: ບ້ານຫ້ວຍມັນ ແລະ ບ້ານທ່າໂພ (ແຜນວາດທີ 1).

**ແຜນວາດທີ 1: ແຜນທີ່ສະຖານທີ່ການຄົ້ນຄ້ວາທົດລອງເມືອງໂພນໄຊ, ແຂວງຫຼວງພະບາງ**




*(ໜ່ວຍງານເສດຖະກິດສັງຄົມ, 2003)*

**1.2.** ຈຸດປະສົງ

ຈຸດປະສົງຫລັກຂອງການສຶກສາຄັ້ງນີ້ ແມ່ນເພື່ອສຶກສາເຖິງການນຳໃຊ້ເທັກນິກ ທີ່ໂຄງການໄດ້ແນະນຳໃຫ້ຊາວກະສິກອນ ໃນບ້ານທີ່ເຂົ້າຮ່ວມໂຄງການ. ເພາະວ່າ ສາລີແມ່ນພືດທີ່ສຳຄັນອີກປະເພດໜຶ່ງ ທີ່ປະຊາຊົນມັກປູກ ເພື່ອນຳໃຊ້ເກືອສັດ ແລະ ຂາຍເປັນສິນຄ້າ ສ້າງລາຍຮັບໃຫ້ແກ່ຄອບຄົວ.

ພວກເຮົາໄດ້ສົມທຽບ ຄວາມແຕກຕ່າງກັນຂອງຮູບແບບ ແລະ ເທັກນິກພື້ນບ້ານຂອງຊາວກະສິກອນເອງ ກັບເທັກນິກທີ່ທາງໂຄງການໄດ້ມອບໃຫ້ຊາວກະສິກອນ. ນອກນັ້ນ, ການສຶກສາຂອງພວກເຮົາຈະໄດ້ສຶກສາຜົນກະທົບ ຂອງການນຳໃຊ້ເທັກນິກການຜະລິດເຫລົ່ານັ້ນ ຕໍ່ກັບຊີວິດການເປັນຢູ່ຂອງຊາວກະສິກອນ ກໍ່ຄືລາຍຮັບ ແລະ ສັດລ້ຽງຂອງເຂົາເຈົ້າ.

**1.3.** ຄຳຖາມຄົ້ນຄ້ວາ

ພວກເຮົາໄດ້ມີຄຳຖາມຄົ້ນຄວ້າ ເພື່ອເປັນບ່ອນອີງໃນການສຶກສາ ຊຶ່ງມີຄຳຖາມດັ່ງນີ້:

- ເທັກນິກການຜະລິດຂອງໂຄງການ ແລະ ຊາວບ້ານມີຄວາມແຕກຕ່າງກັນແນວໃດ? (ຜົນຜະລິດ ແລະ ປັດໃຈການຜະລິດຂອງສາລີ)?
- ພາຍຫລັງການເຂົ້າຮ່ວມໂຄງການມັນໄດ້ຮັບຜົນກະທົບຕໍ່ກັບລາຍຮັບ ແລະ ສັດລ້ຽງ ຄືແນວໃດ?

## 2. ລັກສະນະຂອງເຂດສຶກສາ

**2.1.** ອຸນຫະພູມ ແລະ ປະລິມານນ້ຳຝົນ

ແຂວງຫລວງພະບາງເປັນແຂວງໜຶ່ງ ທີ່ນອນໃນເຂດອາກາດທີ່ເໝາະສົມ ໃນການປູກພືດກະສິກຳ, ມີຄວາມສູງຈາກລະດັບໜ້ານ້ຳທະເລ ໂດຍສະເລ່ຍ 305 ແມັດ. ອຸນຫະພູມສະເລ່ຍຕໍ່ປີແມ່ນ 25.3 ອົງສາເຊ. ອຸນຫະພູມຕ່ຳສຸດແມ່ນໃນເດືອນທັນວາ ຊຶ່ງແມ່ນ 20 ອົງສາເຊ ແລະ ອຸນຫະພູມສູງສຸດ ແມ່ນເດືອນ ພຶດສະພາເທົ່າ 29 ອົງສາເຊ. ປະລິມານນ້ຳຝົນ ສະເລ່ຍລວມໃນປີ 1,400 ມີລີແມັດ. ລະດູຝົນເລີ້ມ ແຕ່ເດືອນເມສາ ຫາ ທ້າຍເດືອນຕຸລາ, ຊຶ່ງລະດູຝົນມີປະລິມານ ນ້ຳຝົນສະເລ່ຍທັງຫມົດ 1,300 ມີລີແມັດ. ລະດູແລ້ງ ເລີ້ມແຕ່ເດືອນພະຈິກ ຫາ ເດືອນ ມີນາ ມີປະລິມານນ້ຳຝົນສະເລ່ຍທັງໝົດ 144.2 ມີລີແມັດ. (ຄອນປານີ ແລະ ບຸນເນື່ອງ, 2005).

ສະນັ້ນ, ອຸນຫະພູມຂອງເມືອງໂພນໄຊ ແມ່ນບໍ່ເຢັນ ແລະ ບໍ່ຮ້ອນເກີນໄປ ຈຶ່ງເປັນທີ່ເໝາະສົມກັບການທຳການຜະລິດກະສິກຳເຊັ່ນ: ເຂົ້າ, ສາລີ, ໄມ້ໃຫ້ໝາກ, ພືດຜັກ, ພືດຕະກຸນຖົ່ວ ແລະ ພືດອື່ນໆ.

**2.2.** ລັກສະນະຂອງດິນ

ເມືອງໂພນໄຊເປັນເມືອງໜຶ່ງ ທີ່ນອນໃນພື້ນທີ່ເຂດພູດອຍ, ພາຍໃນເມືອງໂພນໄຊ ດິນກະສິກຳເກືອບທັງໝົດ ແມ່ນເປັນພູດອຍ, ເຊັ່ນດຽວກັນກັບບ້ານຫ້ວຍມັນ ແລະ ບ້ານທ່າໂພ ດິນກະສິກຳເກືອບທັງໝົດ ກໍ່ເປັນເຂດເນີນສູງ. ສະນັ້ນ, ເນື້ອທີ່ເຫລົ່ານີ້ ກໍ່ຄ້າຍກັບວ່າ ເປັນດິນທີ່ບໍ່ເໝາະສົມກັບການກະສິກຳ. ພ້ອມກັນນັ້ນ, ກໍ່ຍັງເປັນພື້ນທີ່ຄ້ອຍຊັນ ມັນເປັນຂໍ້ຫຍຸ້ງຍາກໃນການຕອບສະໜອງນ້ຳ ແລະ ການພັດທະນາລະບົບຊົນລະປະທານ (Douangsavanh and Bouahom, 2005).

**2.3.** ລັກສະນະທາງສັງຄົມ

ຈາກຂໍ້ມູນການສຳພາດຕົວຈິງ ຂອງທັງສອງນາຍບ້ານ (ບ້ານຫ້ວຍມັນ ແລະ ບ້ານທ່າໂພ) ເດືອນ 3 ປີ 2006, ບ້ານຫ້ວຍມັນ ປະກອບມີທັງໝົດ 52 ຄອບຄົວ ແລະ ປະຊາກອນຈຳນວນ 320

ຄົນ. ໃນນັ້ນ, ຄອບຄົວລາວສູງມີ 12 ຄອບຄົວ, ລາວເທິງມີ 37 ຄອບຄົວ ແລະ ລາວລຸ່ມມີ 3 ຄອບຄົວ.

ບ້ານທ່າໂພແມ່ນບ້ານທີ່ໃຫຍ່ກວ່າບ້ານຫ້ວຍມັນ ປະກອບມີທັງໝົດ 167 ຄອບຄົວ, ມີປະຊາກອນຈຳນວນ 955 ຄົນ. ໃນນັ້ນ, ຄອບຄົວລາວສູງມີ 117 ຄອບຄົວ, ແລະ ລາວລຸ່ມມີ 50 ຄອບຄົວ (ຕາຕະລາງທີ 1 ແລະ 2).

**ຕາຕະລາງທີ 1: ຈຳນວນຄອບຄົວ ແລະ ປະຊາກອນຂອງບ້ານຫ້ວຍມັນ ແລະ ບ້ານທ່າໂພ**

| | ບ້ານຫ້ວຍມັນ | ບ້ານທ່າໂພ |
|---|---|---|
| ຈຳນວນຄອບຄົວທັງໝົດ | 52 | 167 |
| ຈຳນວນປະຊາກອນທັງໝົດ | 320 | 955 |

*(ແຫລ່ງຂໍ້ມູນຈາກ: ການສຳຫລວດຕົວຈິງ 2006 )*

**ຕາຕະລາງທີ 2: ຈຳນວນຊົນເຜົ່າຂອງບ້ານຫ້ວຍມັນ ແລະ ບ້ານທ່າໂພ**

| ຊົນເຜົ່າ | ບ້ານຫ້ວຍມັນ | ບ້ານທ່າໂພ |
|---|---|---|
| ຄອບຄົວລາວສູງ | 12 | - |
| ຄອບຄົວລາວເທິງ | 37 | 117 |
| ຄອບຄົວລາວລຸ່ມ | 3 | 50 |
| ລວມ | 52 | 167 |

*(ແຫລ່ງຂໍ້ມູນຈາກ: ການສຳຫລວດຕົວຈິງ 2006 )*

ປະຊາຊົນທັງສອງບ້ານ ທີ່ໄດ້ປູກສາລີ ໃນປີ 2005 ມີທັງໝົດ 34 ຄອບຄົວ (ບ້ານຫ້ວຍມັນມີ 14 ຄອບຄົວ, ຜູ້ທີ່ບໍ່ໄດ້ປູກ ຈຳນວນ 38 ຄອບຄົວ, ບ້ານ ທ່າໂພມີ 20 ຄອບຄົວ ແລະ ຄອບຄົວທີ່ບໍ່ໄດ້ປູກສາລີ 147 ຄອບຄົວ). ໃນນັ້ນ, ຈຳນວນຄອບຄົວທີ່ຢູ່ໃນກຳລະນີສຶກສາ ມີຄອບຄົວລາວສູງ ຈຳນວນ 2 ຄອບຄົວ, ຄອບຄົວລາວເທິງມີ ຈຳນວນ 19 ຄອບຄົວ ແລະ ຄອບຄົວ ລາວລຸ່ມມີຈຳນວນ 13 ຄອບຄົວ. ຄອບຄົວທີ່ເຂົ້າຮ່ວມໂຄງການ LSUAFRP ແມ່ນມີ 17 ຄອບຄົວ (ບ້ານຫ້ວຍມັນ 3 ຄອບຄົວ ແລະ ບ້ານທ່າໂພມີ 14 ຄອບຄົວ). ຄອບຄົວຈຳນວນນີ້ ເລີ່ມປູກສາລີໃນຮູບແບບຂອງໂຄງການ ຊຶ່ງເລີ່ມແຕ່ປີ 2002 ເປັນຕົ້ນມາ. ນອກນັ້ນ, ມີຄອບຄົວທີ່ບໍ່ເຂົ້າຮ່ວມໂຄງການແມ່ນມີ 17 ຄອບຄົວ ເຊັ່ນດຽວກັນ (ບ້ານຫ້ວຍມັນ 11 ຄອບຄົວ ແລະ ບ້ານທ່າໂພມີ 6 ຄອບຄົວ) ທີ່ປູກສາລີ ໂດຍນຳໃຊ້ເທັກນິກຂອງເຂົາເອງຕະຫລອດມາ. ຈຸດປະສົງຂອງການປູກສາ ລີຂອງປະຊາຊົນທັງສອງພາກສ່ວນນີ້ ພາກສ່ວນໜຶ່ງແມ່ນປູກທົດລອງຮ່ວມກັບໂຄງການ ແລະ ພາກສ່ວນທີສອງແມ່ນປູກເພື່ອຮັບໃຊ້ຄອບຄົວ, ໃຊ້ເກືອສັດ ແລະ ຂາຍສ້າງລາຍຮັບເສີມໃຫ້ແກ່ຄອບຄົວ. ຊຶ່ງສະແດງໃນຕາຕະລາງທີ 3 ດັ່ງລຸ່ມນີ້:

**ຕາຕະລາງທີ 3 ຈຳນວນຊາວກະສິກອນທີ່ປູກສາລີທັງສອງບ້ານ**

| | ຊາວກະສິກອນທີ່ປູກສາລີ ແລະ ຜູ້ບໍ່ໄດ້ປູກສາລີ (ຄອບຄົວ) | | |
|---|---|---|---|
| | ເຂົ້າຮ່ວມ | ບໍ່ເຂົ້າຮ່ວມ | ຜູ້ບໍ່ປູກສາລີ |
| ບ້ານຫ້ວຍມັນ | 3 | 11 | 38 |
| ບ້ານທ່າໂພ | 14 | 6 | 147 |

*(ແຫລ່ງຂໍ້ມູນຈາກ: ການສຳຫລວດຕົວຈິງ 2006 )*

## 3. ຄວາມສຳຄັນ ແລະ ການຕະຫລາດສາລີ ເມືອງໂພນໄຊ

### 3.1 ຄວາມສຳຄັນ ແລະ ຄຸນປະໂຫຍດຂອງສາລີ

ສາລີເປັນພືດໄລຍະສັ້ນ ສາມາດປູກໄດ້ທັງລະດູແລ້ງ ແລະ ລະດູຝົນ. ສາລີສາມາດໃຊ້ເປັນອາຫານຂອງຄົນ ແລະ ສັດ. ນອກຈາກນັ້ນ, ສາລີຈະເປັນພືດທີ່ສາມາດສ້າງລາຍຮັບໃຫ້ແກ່ຄອບຄົວ. ຄອບຄົວທີ່ໄດ້ຜ່ານການສຳພາດຢູ່ສອງບ້ານ ສ່ວນໃຫຍ່ແມ່ນອາໃສສາລີເປັນພືດເສດຖະກິດ ທີ່ສຳຄັນອີກພືດໜຶ່ງ ໃນການສ້າງລາຍໄດ້ໃຫ້ແກ່ພວກເຂົາ.

### 3.2 ສະພາບການຕະຫລາດຂອງສາລີເຂດເມືອງໂພນໄຊ

ສະພາບການຕະຫລາດສາລີເຂດເມືອງໂພນໄຊ ແມ່ນມີການຂະຫຍາຍຕົວຂຶ້ນເລື້ອຍໆ ເລີ່ມແຕ່ປີ 2000 ເປັນຕົ້ນມາ. ຊຶ່ງວ່າເມື່ອກ່ອນ ຈະມີແຕ່ແມ່ຄ້າພາຍໃນບ້ານມາເກັບຊື້ ຫລື ແລກປ່ຽນກັນພາຍໃນບ້ານເທົ່ານັ້ນ, ປະຈຸບັນໄດ້ມີພໍ່ຄ້າຈາກຕົວເມືອງເຂົ້າມາເກັບຊື້ສາລີ ໃນເຂດພື້ນທີ່ຂອງໂຄງການ LSUAFRP ແລະ ປະຊາຊົນໃນເຂດນີ້.

ອີງຕາມການໃຫ້ສຳພາດ ຂອງພໍ່ຄ້າບ້ານນ້ຳບໍ່ໃນຕົ້ນປີ 2006 ລາຄາຂາຍຂອງສາລີແມ່ນຂຶ້ນກັບລາຄາທ້ອງຕະຫລາດໂດຍສະເລ່ຍແລ້ວຊາວກະສິກອນທີ່ໄດ້ຂາຍໃນເຂດສອງບ້ານແມ່ນມີລາຄາ 900 ເຖິງ 1,200 ກີບ ຕໍ່ກິໂລ, ເຊິ່ງເຮົາຈະເຫັນຈາກ ວົງຈອນການຕະຫລາດສາລີ ຂອງທັງສອງບ້ານດັ່ງກ່າວ ທີ່ໄດ້ສະແດງໃນຕາຕະລາງແຜນວາດ 2 .

**ແຜນວາດທີ 2: ສາຍພົວພັນການຕະຫລາດຂອງສາລີໃນພື້ນທີ່ການສຶກສາ.**




ຈາກແຜນວາດທີ 2 ເຫັນໄດ້ວ່າ ຊາວກະສິກອນຈະມີສອງທາງເລືອກໃນການຂາຍສາລີຂອງເຂົາເຈົ້າ. ທາງເລືອກທີໜຶ່ງແມ່ນຊາວກະສິກອນໄດ້ຂາຍສາລີໃຫ້ກັບພໍ່ຄ້າຈາກບ້ານນ້ຳບໍ່ ແລະ ພໍ່ຄ້າຈາກເມືອງຫລວງພະບາງ, ໂດຍທີ່ພໍ່ຄ້າຈະມາເກັບຊື້ຈາກຊາວກະສິກອນໂດຍກົງ ແລະ ທາງເລືອກທີສອງ ແມ່ນຊາວກະສິກອນໄດ້ນຳສາລີມາຂາຍຢູ່ຕະຫລາດບ້ານນ້ຳບໍ່ ແລະ ພໍ່ຄ້າຈາກບ້ານດັ່ງກ່າວກໍ່ເກັບຊື້ສາລີຈາກຊາວກະສິກອນກັບທີ່ ແລ້ວມາຂາຍຕໍ່ໃຫ້ພໍ່ຄ້າ ທີ່ມາຈາກເມືອງຫລວງພະບາງ. ແຕ່ວ່າ ຍັງມີພໍ່ຄ້າເມືອງຫລວງພະບາງ ມາເກັບຊື້ຢູ່ຕະຫລາດບ້ານນ້ຳບໍ່ໂດຍກົງ ແລ້ວນຳເຂົ້າໄປຂາຍຢູ່ຕະຫລາດ ແຂວງ ຫລວງພະບາງ. ຊຶ່ງປະມານ 60% ແມ່ນພໍ່ຄ້າຈາກບ້ານ ນ້ຳບໍ່ ເກັບຊື້ນຳຊາວກະສິກອນ ແລ້ວຂາຍສົ່ງໃຫ້ພໍ່ຄ້າເມືອງຫລວງພະບາງ. ນອກນັ້ນ, ແມ່ນພໍ່ຄ້າຈາກເມືອງ ຫລວງພະບາງ ມາເກັບຊື້ເອງ.

## 4. ກິດຈະກຳການປູກສາລີ

ກິດຈະກຳການປູກສາລີ ໂດຍທົ່ວໄປຊາວກະສິກອນທັງຜູ້ເຂົ້າຮ່ວມໂຄງການ ແລະ ຜູ້ບໍ່ໄດ້ເຂົ້າຮ່ວມໂຄງການ ຈະເລີ່ມຖາງສວນສາລີ ໃນລະຫວ່າງທ້າຍເດືອນກຸມພາ ຫາ ເດືອນມີນາ, ປູກໃນ

ລະຫວ່າງ ເດືອນເມສາ ຫາ ເດືອນ ມິຖຸນາ, ເສຍຫຍ້າໃນເດືອນກໍລະກົດ ຫາ ເດືອນສິງຫາ ແລະ ເກັບກ່ຽວໃນລະຫວ່າງເດືອນ ກັນຍາ ຫາ ເດືອນຕຸລາ.

4.1 ເນື້ອທີ່ການປູກສາລີ

ຈຳນວນເນື້ອທີ່ທັງໝົດທີ່ປູກສາລີຂອງຊາວກະສິກອນ ຜູ້ທີ່ໄດ້ເຂົ້າຮ່ວມໂຄງການ ແລະ ບໍ່ໄດ້ເຂົ້າຮ່ວມໂຄງການຈະເຫັນໄດ້ວ່າ: ເນື້ອທີ່ ທີ່ປູກສາລີຂອງພາກສ່ວນໃນໂຄງການແມ່ນ 7.5 ເຮັກຕາ, ສະເລ່ຍຕໍ່ຄອບຄົວແລ້ວແມ່ນ 0.4 ເຮັກຕາ/ຄອບຄົວ ແລະ ສຳລັບ ພາກສ່ວນນອກໂຄງການມີເນື້ອທີ່ປູກສາລີທັງໝົດ 4.5 ເຮັກຕາ, ສະເລ່ຍແລ້ວແມ່ນ 0.3 ເຮັກຕາ/ຄອບຄົວ. ຊຶ່ງຈະເຫັນໄດ້ດັ່ງຕາຕະລາງທີ 4.

ຕາຕະລາງທີ 4: ເນື້ອທີ່ປູກສາລີຂອງບ້ານຫ້ວຍມັນ ແລະ ບ້ານທ່າໂພສະເລ່ຍຕໍ່ຄອບຄົວ.

| ເນື້ອທີ່ | ເນື້ອທີ່ປູກສາລີ (ຮຕ) | |
|---|---|---|
| | ຄອບຄົວທີ່ເຂົ້າຮ່ວມໂຄງການ | ຄອບຄົວທີ່ບໍ່ໄດ້ເຂົ້າຮ່ວມໂຄງການ |
| ເນື້ອທີ່ລວມ | 7.5 | 4.5 |
| ສະເລ່ຍເນື້ອທີ່ຕໍ່ຄອບຄົວ | 0.4 | 0.3 |

*(ແຫລ່ງຂໍ້ມູນຈາກ: ການສຳຫລວດຕົວຈິງ 2006 )*

4.2 ແຮງງານ

ແຜນວາດທີ 3 ສະແດງການນຳໃຊ້ ແຮງງານຂອງທັງສອງພາກສ່ວນ ໂດຍພາຍໃນສອງບ້ານສະເລ່ຍຕໍ່ໜຶ່ງເຮັກຕາ. ຈາກແຜນວາດທີ 3 ເຫັນໄດ້ວ່າ: ຄອບຄົວທີ່ຢູ່ນອກໂຄງການໄດ້ນຳໃຊ້ແຮງງານຫລາຍກວ່າ ຄອບຄົວທີ່ຢູ່ໃນໂຄງການ, ໂດຍສະເພາະ ແມ່ນໃຊ້ເຂົ້າໃນກິດຈະກຳການບົວລະບັດ (25 ແຮງງານ), ຖາງ (23 ແຮງງານ), ຮ້າ (12 ແຮງງານ) ແລະ ການເກັບກ່ຽວ (12 ແຮງງານ) ເປັນຕົ້ນ. ນີ້ກໍ່ເປັນບັນຫາທີ່ສຳຄັນ ໃນການນຳໃຊ້ປັດໃຈທາງດ້ານແຮງງານ ຊຶ່ງຈະມີຜົນຕໍ່ ລາຍຮັບ ແລະ ກຳໄລ, ເຮັດໃຫ້ຕົ້ນທຶນໃນການຜະລິດສູງ ແຕ່ວ່າຜົນກຳໄລຫລຸດລົງ ຍ້ອນບັນຫາການນຳໃຊ້ແຮງງານຫຼາຍໂພດຖ້າເບິ່ງໃນ ແງ່ເສດຖະກິດ.

**ແຜນວາດ 3: ຈຳນວນແຮງງານທີ່ໃຊ້ເຂົ້າໃນການຜະລິດສາລີ ສະເລ່ຍຕໍ່ວັນ ຕໍ່ເຮັກຕາ ປີ 2005**




*(ແຫລ່ງຂໍ້ມູນຈາກ: ການສຳຫລວດຕົວຈິງ 2006 )*

ຄວາມແຕກຕ່າງກັນທາງດ້ານການນຳໃຊ້ແຮງງານເຂົ້າໃນການບົວລະບັດ ຍ້ອນວ່າ ຄອບຄົວໃນໂຄງການ ແມ່ນມີກິດຈະກຳອື່ນໆທີ່ຈະຕ້ອງປະຕິບັດອີກເຊັ່ນ: ກິດຈະກຳໄມ້ໃຫ້ໝາກ, ລ້ຽງສັດ, ປູກພືດນອກລະດູ ແລະອື່ນໆ. ແຕ່ວ່າພາກສ່ວນນອກໂຄງການແມ່ນມີກິດຈະກຳໜ້ອຍກວ່າ, ເພາະສະນັ້ນ ຈຶ່ງໄດ້ນຳໃຊ້ແຮງງານເຂົ້າໃນການບົວລະບັດສາລີສູງກວ່າ, ແຕ່ວ່າ ການນຳໃຊ້ແຮງງານຫລາຍເຂົ້າໃນການຜະລິດ ແມ່ນບໍ່ເປັນຜົນດີຕໍ່ກັບຜົນກຳໄລ ເຮັດໃຫ້ຜົນກຳໄລຫລຸດລົງ. ດັ່ງນັ້ນ, ຈຶ່ງເວົ້າໄດ້ວ່າ ພາກສ່ວນເຂົ້າຮ່ວມໂຄງການ ແມ່ນນຳໃຊ້ແຮງງານຢ່າງປະຢັດ ແລະ ມີປະສິດທິພາບສູງກວ່າ.

## 4.3 ຜົນຜະລິດ

ການດຳເນີນກິດຈະກຳໃນການປູກສາລີ ແມ່ນໄດ້ຮັບຜົນຜະລິດທີ່ແຕກຕ່າງກັນ ລະຫວ່າງຄອບຄົວໃນໂຄງການ ແລະ ນອກໂຄງການ. ຫລັງຈາກທີ່ໄດ້ຜົນຜະລິດຈາກການປູກສາລີ, ຄອບຄົວຊາວກະສິກອນ ໄດ້ນຳໃຊ້ຜົນຜະລິດດັ່ງກ່າວ ເພື່ອຂາຍ ແລະ ເກັບໄວ້ເກືອສັດ ໂດຍອີງຕາມຜົນຜະລິດຂອງຕົນເອງ. ຊຶ່ງໃນຕາຕະລາງທີ 5 ເຫັນວ່າ: ການຜະລິດສາລີຂອງບ້ານຫ້ວຍມັນ ສ່ວນໃຫຍ່ແມ່ນເອົາຜົນຜະລິດໄວ້ໃຊ້ເກືອສັດ, ຈຳນວນຂາຍແມ່ນເລັກໜ້ອຍ, ໃນບ້ານທ່າໂພ ການຜະລິດແມ່ນເນັ້ນໃສ່ການຂາຍສົ່ງລາຍຮັບເປັນຕົ້ນຕໍ. ເຖິງຢ່າງໃດກໍ່ຕາມ, ພ້ອມກັນນັ້ນ ພວກເຂົາກໍ່ຍັງເກັບໄວ້ຈຳນວນໜຶ່ງໃຫ້ສັດລ້ຽງ. ນີ້ກໍ່ແມ່ນທາງເລືອກຂອງຊາວກະສິກອນ ໃນການນຳໃຊ້ສາລີທີ່ໄດ້ມາ ໃຫ້ເກີດປະໂຫຍດສູງສຸດຕໍ່ກັບເງື່ອນໄຂຕົວຈິງຂອງຄອບຄົວ.

ຕາຕະລາງທີ 5: ຜົນຜະລິດ ແລະ ການຊົມໃຊ້ຂອງຊາວກະສິກອນໃນປີ 2005

| | ໃນໂຄງການ | | | ນອກໂຄງການ | | |
|---|---|---|---|---|---|---|
| | ຜົນຜະລິດລວມ (ກລ) | ຂາຍ (ກລ) | ເກືອສັດ (ກລ) | ຜົນຜະລິດລວມ (ກລ) | ຂາຍ (ກລ) | ເກືອສັດ (ກລ) |
| ບ້ານຫ້ວຍມັນ | 1,000 | 250 | 750 | 3,910 | 3,160 | 750 |
| ບ້ານ ທ່າໂພ | 5,110 | 3,650 | 1,460 | 250 | 200 | 50 |

*(ແຫລ່ງຂໍ້ມູນຈາກ: ການສຳຫລວດຕົວຈິງ2006 )*

ເຮົາຈະເຫັນໄດ້ວ່າ ຜົນຜະລິດສະເລ່ຍຕໍ່ເຮັກຕາຂອງພາກສ່ວນໃນໂຄງການ ແມ່ນໜ້ອຍກວ່າພາກສ່ວນນອກໂຄງການ (ຕາຕະລາງທີ 6). ສາຍເຫດທີ່ໄດ້ຜົນຜະລິດໜ້ອຍ ແມ່ນຍ້ອນວ່າພາກສ່ວນໃນໂຄງການແມ່ນເອົາໃຈໃສ່ໃນການບົວລະບັດຮັກສາ, ເຊິ່ງຈະເຫັນໄດ້ ໃນການນຳໃຊ້ແຮງງານເຂົ້າໃນການບົວລະບັດຮັກສາ (ຈາກແຜນວາດທີ 3). ນອກຈາກບັນຫາດັ່ງກ່າວນີ້ ຍັງມີບັນຫາ ເລື່ອງດິນບໍ່ງາມ, ໜູກິນ ແລະອື່ນໆ. ແຕ່ເມື່ອມາສົມທຽບຜົນຜະລິດສາລີຂອງເມືອງໂພນໄຊ, ແຂວງ ຫລວງພະບາງ ແລະ ເມືອງນາໝໍ້, ແຂວງ ອຸດົມໄຊ ແລ້ວ, ຜົນຜະລິດສາລີເມືອງ ໂພນໄຊ ໄດ້ປະມານ 1 ໂຕນ ຕໍ່ເຮັກຕາ, ແຕ່ວ່າເມືອງນາໝໍ້ ສະເລ່ຍ ຕໍ່ເຮັກຕາແມ່ນປະມານ 2 ໂຕນ. (phouyyavong and Talije.2006.p7) ຊຶ່ງເຫັນໄດ້ວ່າ ທັງສອງເມືອງດັ່ງກ່າວ ຜົນຜະລິດແມ່ນມີການຫລຸດໂຕນກັນຫລາຍ.

ຕາຕະລາງທີ 6: ຜົນຜະລິດສະເລ່ຍຂອງຊາວກະສິກອນ

| ຄອບຄົວຊາວກະສິກອນ | ເນື້ອທີ່ປູກສາລີ (ເຮັກຕາ) | ຜົນຜະລິດສະເລ່ຍຕໍ່ເຮັກຕາ (ກິໂລ/ເຮັກຕາ) |
|---|---|---|
| ຄອບຄົວທີ່ເຂົ້າຮ່ວມໂຄງການ | 7.5 | 815 |
| ຄອບຄົວທີ່ບໍ່ໄດ້ເຂົ້າຮ່ວມໂຄງການ | 4.5 | 924 |

*(ແຫລ່ງຂໍ້ມູນຈາກ: ການສຳຫລວດຕົວຈິງ 2006 )*

## 4.4 ລາຍຮັບທັງໝົດ

ລາຍຮັບທັງໝົດຂອງຊາວກະສິກອນຜູ້ເຂົ້າຮ່ວມໂຄງການ ແຕ່ປີ 2002-2005 ອັດຕາການເພີ່ມຂຶ້ນທາງດ້ານລາຍຮັບລວມຂອງຄອບຄົວຊາວກະສິກອນ ພາກສ່ວນເຂົ້າຮ່ວມໂຄງການຈະເຫັນໄດ້ວ່າ ລາຍຮັບຂອງເຂົາເຈົ້າໄດ້ເພີ່ມຂຶ້ນເປັນລຳດັບ ພາຍຫລັງເຂົ້າຮ່ວມທົດລອງກັບໂຄງການ LSUAFRP. ຈາກແຜນວາດທີ 4 ລຸ່ມນີ້ ຈະເຫັນໄດ້ວ່າ ໃນປີ 2001 ກ່ອນເຂົ້າຮ່ວມໂຄງການ

ລາຍຮັບສະເລ່ຍຕໍ່ຄອບຄົວ ຂອງພາກສ່ວນເຂົ້າຮ່ວມໂຄງການແມ່ນ 4.7 ລ້ານກີບ ຕໍ່ປີ ແລະ ເພີ່ມຂຶ້ນຕາມລຳດັບເຖິງ 5.4 ລ້ານກີບ ຕໍ່ປີ ໃນປີ 2005.

**ແຜນວາດທີ 4: ແຜນວາດ ກ່ຽວກັບລາຍຮັບທັງໝົດແຕ່ປີ 2001-2005**




*(ແຫລ່ງຂໍ້ມູນຈາກ: ການສຳຫລວດຕົວຈິງ 2006 )*

ຈາກແຜນວາດທີ 4 ຂ້າງເທິງນີ້ ສະແດງໃຫ້ເຫັນວ່າ ລາຍຮັບທັງໝົດສະເລ່ຍຕໍ່ຄອບຄົວ ຂອງພາກສ່ວນບໍ່ໄດ້ເຂົ້າຮ່ວມໂຄງການ ແມ່ນມີການປ່ຽນແປງ, ໃນປີ 2001 ລາຍຮັບຕໍ່ຄອບຄົວແມ່ນ 3.2 ລ້ານກີບຕໍ່ປີ, ແຕ່ປີ 2003 ລາຍຮັບພັດຫລຸດລົງຄື 2.5 ລ້ານກີບ, ປີ 2004 ລາຍຮັບແມ່ນມີການເພີ່ມຂຶ້ນເລັກນ້ອຍ ແລະ ປີ 2005 ລາຍຮັບພັດຫລຸດລົງອີກ. ເວົ້າລວມແລ້ວ ລາຍຮັບຕໍ່ຄອບຄົວຂອງຊາວກະສິກອນ ພາກສ່ວນບໍ່ໄດ້ເຂົ້າຮ່ວມໂຄງການ ແມ່ນບໍ່ສະໝໍ່າສະເໝີ ມີການເພີ່ມຂຶ້ນ ແລະ ຫລຸດລົງເລື້ອຍໆ. ໂດຍທົ່ວໄປ ລາຍຮັບຂອງຄອບຄົວບໍ່ໄດ້ເຂົ້າຮ່ວມໂຄງການ ຈະໜ້ອຍກວ່າຄອບຄົວເຂົ້າຮ່ວມໂຄງການ.

**ແຜນວາດທີ 5: ສະເລ່ຍລາຍຮັບ ແລະ ລາຍຈ່າຍຕໍ່ປີ ຂອງຊາວກະສິກອນ ປີ 2005**




*(ແຫລ່ງຂໍ້ມູນຈາກ: ການສຳຫລວດຕົວຈິງ2006 )*

ຈາກແຜນວາດທີ 5 ສາມາດອະທິບາຍໃຫ້ຮູ້ວ່າ ລາຍຮັບສະເລ່ຍຕໍ່ຄອບຄົວຂອງຊາວກະສິກອນໃນປີ 2005 ພາກສ່ວນເຂົ້າຮ່ວມໂຄງການ ແມ່ນສູງກວ່າຄອບຄົວຊາວກະສິກອນ ພາກສ່ວນບໍ່ໄດ້ເຂົ້າຮ່ວມໂຄງການຄື: ລາຍຮັບສະເລ່ຍແມ່ນ 5.4 ລ້ານກີບຕໍ່ຄອບຄົວ, ສ່ວນພາກສ່ວນຄອບຄົວທີ່ບໍ່ໄດ້ເຂົ້າຮ່ວມໂຄງການ ສະເລ່ຍແລ້ວແມ່ນ 3.8 ລ້ານກີບຕໍ່ຄອບຄົວ. ແຕ່ວ່າ ລາຍຈ່າຍຂອງຄອບຄົວຊາວກະສິກອນພາກສ່ວນເຂົ້າຮ່ວມໂຄງການ ແລະ ພາກສ່ວນບໍ່ເຂົ້າຮ່ວມໂຄງການແມ່ນເກືອບເທົ່າກັນ ຄື 2.8 ລ້ານກີບ ແລະ 2.9 ລ້ານກີບ ຕາມລຳດັບ. ສະຫລຸບແລ້ວ ລາຍຮັບສຸດທິສະເລ່ຍຕໍ່ຄອບຄົວ ຂອງຊາວກະສິກອນພາກສ່ວນໃນໂຄງການ ແມ່ນສູງກວ່າຄອບຄົວພາກສ່ວນນອກໂຄງການ.

## 4.5 ລາຍຮັບຈາກສາລີ ປີ 2005

ຜົນໄດ້ຮັບຈາກການສົມທຽບຜົນຜະລິດຕົ້ນທຶນ ແລະ ລາຍຮັບຂອງທັງສອງພາກສ່ວນ ສະເລ່ຍຕໍ່ເຮັກຕາ ແມ່ນສະແດງໃນ ຕາຕະລາງ 6.

**ຕາຕະລາງທີ 6: ລາຍຮັບສຸດທິຈາກການຜະລິດສາລີຕໍ່ເຮັກຕາ**

| **ກິດຈະກຳ** | **ຄອບຄົວທີ່ເຂົ້າຮ່ວມ ໂຄງການ LSUAFRP** | **ຄອບຄົວທີ່ ບໍ່ໄດ້ເຂົ້າຮ່ວມ ໂຄງການ LSUAFRP** |
|---|---|---|
| | ສະເລ່ຍ (ກີບ/ຮຕ) | ສະເລ່ຍ (ກີບ/ຮຕ) |
| ຈ້າງແຮງງານ | 130,000 | 220,000 |
| ຊື້ອຸປະກອນ | 168,000 | 339,000 |
| ແນວພັນ | 270,000 | 88,000 |
| ລວມລາຍຈ່າຍ | 568,000 | 647,000 |
| ລາຍຮັບສະເລ່ຍຈາກສາລີ | 815,000 | 924,000 |
| **ລາຍຮັບສຸດທິ** | **247,000** | **277,000** |

*(ແຫລ່ງຂໍ້ມູນຈາກ: ການສຳຫລວດຕົວຈິງ 2006 )*

ຈາກຕາຕະລາງ 6 ເຫັນໄດ້ວ່າ ການນຳໃຊ້ຕົ້ນທຶນເຂົ້າໃນການຜະລິດສາລີ ໂດຍສະເລ່ຍໃນຈຳນວນໜຶ່ງເຮັກຕາ ສຳລັບການນຳເຂົ້າປັດໃຈການຜະລິດຂອງຄອບຄົວຜູ້ເຂົ້າຮ່ວມໂຄງການແມ່ນສູງໂດຍສະເພາະແມ່ນແນວພັນ, ແຕ່ວ່າຜົນຜະລິດ ແລະ ລາຍຮັບຈາກສາລີ ຂອງຄອບຄົວດັ່ງກ່າວພັດໄດ້ໜ້ອຍກວ່າ, ຕົ້ນທຶນໃນການຜະລິດຈາກສາລີ ແມ່ນ 568,000 ກີບ ແລະ ລາຍຮັບ ແມ່ນ 815,000 ກີບ ແລະ ມີກຳໄລ ແມ່ນ 247,000 ກີບ. ຈຳນວນຄອບຄົວຜູ້ບໍ່ໄດ້ເຂົ້າຮ່ວມໂຄງການນຳໃຊ້ຕົ້ນທຶນໃນການຜະລິດສູງກວ່າຄື: 647,000 ກີບ, ຄອບຄົວດັ່ງກ່າວເຖິງແມ່ນວ່າບໍ່ໄດ້ລົງທຶນສຳລັບແນວພັນແຕ່ເຂົາເຈົ້າກໍ່ໄດ້ລົງທຶນສຳລັບຊື້ອຸປະກອນແມ່ນສອງເທົ່າຖ້າທຽບໃສ່ພາກສ່ວນຄອບຄົວເຂົ້າຮ່ວມໂຄງການ, ຍ້ອນວ່າຄອບຄົວພາກສ່ວນດັ່ງກ່າວນີ້ໄດ້ນຳໃຊ້ແຮງງານເຂົ້າໃນການຜະລິດ

ຫລາຍກວ່າ. ດັ່ງນັ້ນ, ແມ່ນຕ້ອງໄດ້ຊື້ອຸປະກອນຫລາຍກ່ວາເຊັ່ນວ່າ: ພ້າ, ຈົກ, ສຽມ, ແຕ່ວ່າຜົນຜະລິດ ກໍ່ໄດ້ສູງກວ່າ ຄອບຄົວຜູ້ເຂົ້າຮ່ວມໂຄງການ ລາຍຮັບຈາກການຂາຍ ກໍ່ໄດ້ສູງກວ່າຄື: 924,000 ກີບ ແລະ ກຳໄລແມ່ນ 277,000 ກີບ.

ສະຫລຸບແລ້ວ ເຫັນວ່າຄອບຄົວຂອງຊາວກະສິກອນຜູ້ເຂົ້າຮ່ວມໂຄງການ ແມ່ນໄດ້ຮັບກຳໄລຕ່ຳກວ່າຄອບຄົວຊາວກະສິກອນຜູ້ບໍ່ໄດ້ເຂົ້າຮ່ວມໂຄງການ. ດ້ວຍເຫດຜົນທີ່ວ່າ ຄອບຄົວຊາວກະສິກອນໃນໂຄງການ ໄດ້ນຳໃຊ້ຕົ້ນທຶນໃນການຊື້ແນວພັນ ຫລາຍກວ່າຄອບຄົວຊາວກະສິກອນນອກໂຄງການ. ພ້ອມກັນນັ້ນ, ຊາວກະສິກອນໃນໂຄງການ ຍັງໄດ້ທຳການທົດລອງກັບໂຄງການ ອີກຫລາຍກິດຈະກຳ ຈຶ່ງຂາດແຮງງານງານໃນການບົວລະບັດຮັກສາ ແລະ ເອົາໃຈໃສ່ໃນການປັບປຸງຜົນຜະລິດສາລີຂອງຕົນ. ດັ່ງນັ້ນ, ຊາວກະສິກອນຜູ້ເຂົ້າຮ່ວມໂຄງການ ຈຶ່ງມີຜົນກຳໄລຕ່ຳກວ່າ. ແຕ່ວ່າການປູກສາລີກໍ່ເປັນແຫລ່ງລາຍຮັບໜຶ່ງຂອງຄອບຄົວ. ນອກນັ້ນ, ຍັງມີກິດຈະກຳຕ່າງໆຂອງຄອບຄົວອີກ. ແຕ່ເຖິງຢ່າງໃດກໍ່ຕາມ ເມື່ອມາສັງເກດເບິ່ງທາງຜົນຜະລິດແລ້ວ ກໍ່ຍັງເຫັນວ່າຕ່ຳກວ່າປົກກະຕິ, ອາດຍ້ອນສາເຫດບາງຢ່າງເຊັ່ນ: ການນຳໃຊ້ບັນດາເທັກນິກເຫລົ່ານັ້ນ ຍັງບໍ່ໄດ້ຕາມຄຳແນະນຳຂອງພະນັກງານວິຊາການ ແລະ ບັນຫາອື່ນໆ ລວມທັງບັນຫາໜູກິນ, ຂາດຝຸ່ນ, ດິນບໍ່ດີ, ຫຍ້າຫຼາຍໂພດ ແລະ ເກັບກ່ຽວ ບໍ່ທັນກັບເວລາ.

4.6 ຈຳນວນການເພີ່ມຂຶ້ນຂອງສັດລ້ຽງຂອງທັງສອງພາກສ່ວນ

ຈຳນວນສັດລ້ຽງຂອງຄອບຄົວທີ່ເຂົ້າຮ່ວມທົດລອງສາລີກັບໂຄງການ LSUAFRP ຈາກການໃຫ້ສຳພາດຂອງຄອບຄົວຊາວກະສິກອນ, ຜູ້ປູກສາລີທົດລອງກັບໂຄງການ LSUAFRP ໄດ້ເວົ້າວ່າ: ສາລີທີ່ເກັບກູ້ໄດ້ນັ້ນ ສ່ວນໜຶ່ງແມ່ນໄດ້ຂາຍ ແລະ ສ່ວນໜຶ່ງແບ່ງໄວ້ເກືອສັດລ້ຽງ, ໂດຍສະເພາະແມ່ນ: ໝູ, ເປັດ ແລະ ໄກ່, ເກືອບວ່າ 90% ແມ່ນໃຊ້ສາລີເກືອເປັນອາຫານຂອງສັດລ້ຽງ. ນອກນັ້ນ, ແມ່ນໃຊ້ ຮຳ, ເຂົ້າປຽນ ແລະ ແມ່ນອາຫານຈາກທຳມະຊາດຈຳນວນໜຶ່ງເຊັ່ນ: ຍອກກ້ວຍ, ໃບມັນຕົ້ນ ແລະ ໝາກຖົ່ວແຮ.

**ຕາຕະລາງທີ 7: ຈຳນວນສັດລ້ຽງຂອງຄອບຄົວທີ່ປູກສາລີໃນໂຄງການ**

| ຊະນິດສັດ | ຈຳນວນສັດລ້ຽງພາກສ່ວນໃນໂຄງການ | | ສະເລ່ຍສັດລ້ຽງຕໍ່ຄອບຄົວ | | ເປີເຊັນການເພີ່ມຂຶ້ນ |
|---|---|---|---|---|---|
| | 2001 | 2005 | 2001 | 2005 | 2001 - 2005 |
| ໝູ | 23 | 33 | 1 | 2 | 100% |
| ໄກ່ | 455 | 860 | 28 | 54 | 93% |
| ເປັດ | 76 | 161 | 5 | 10 | 100% |

*(ແຫລ່ງຂໍ້ມູນຈາກ: ການສຳຫລວດຕົວຈິງ 2006 )*

ຕາຕະລາງທີ 7 ສະແດງໃຫ້ເຫັນວ່າ ໃນປີ 2001 ປະຊາຊົນໃນໂຄງການ ຈຳນວນ 17 ຄອບຄົວ ມີສັດລ້ຽງໂດຍສະເລ່ຍ ຄື: ໝູ 1 ໂຕ, ເປັດ 5 ໂຕ ແລະ ໄກ່ 28 ໂຕ. ພາຍຫລັງທີ່ໃຊ້ສາລີເກືອເປັນອາຫານຫລັກ ອັດຕາການເພີ່ມຂຶ້ນຂອງສັດລ້ຽງຕໍ່ຄອບຄົວ ຖ້າທຽບໃສ່ກ່ອນເຂົ້າໂຄງການ ປີ 2001 ຈຳນວນສັດລ້ຽງ ໝູ 2 ໂຕ, ເປັດ 10 ໂຕ ແລະ ໄກ່ 54 ໂຕ. ສະແດງໃຫ້ເຫັນວ່າ ໝູ ແລະ ເປັດມີການເພີ່ມຂຶ້ນເຖິງ 1 ເທົ່າຕົວ ແລະ ໄກ່ເພີ່ມຂຶ້ນ ເກືອບໜຶ່ງເທົ່າຕົວ. ຄິດໄລ່ເປັນເປີເຊັນແມ່ນ ໝູ ແລະ ເປັດ ເພີ່ມຂຶ້ນຈາກປີ 2001 ເປັນ 100% ແລະ ໄກ່ 93%. ເວົ້າລວມແລ້ວສັດທີ່ໃຊ້ສາລີເກືອທັງ 3 ຊະນິດ ແມ່ນມີການເພີ່ມຂຶ້ນຕາມລຳດັບ ພາຍຫລັງໂຄງການ LSUAFRP ໄດ້ໃຫ້ການ ຊ່ວຍເຫລືອທາງ ດ້ານວິຊາການ ແລະ ເທັກນິກ.

**ຕາຕະລາງທີ 8: ຈຳນວນສັດລ້ຽງຂອງຄອບຄົວທີ່ປູກສາລີນອກໂຄງການ**

| ຊະນິດສັດ | ຈຳນວນສັດລ້ຽງພາກສ່ວນນອກໂຄງການ | | ສະເລ່ຍສັດລ້ຽງຕໍ່ຄອບຄົວ | | ເປີເຊັນການເພີ່ມຂຶ້ນ |
|---|---|---|---|---|---|
| | 2001 | 2005 | 2001 | 2005 | 2005 |
| ໝູ | 37 | 45 | 2 | 3 | 50% |
| ໄກ່ | 471 | 677 | 29 | 42 | 45% |
| ເປັດ | 96 | 47 | 6 | 3 | -50% |

*(ແຫລ່ງຂໍ້ມູນຈາກ: ການສຳຫລວດຕົວຈິງ 2006 )*

ຈາກຕາຕະລາງ: 8 ຈະເຫັນໄດ້ອັດຕາການເພີ່ມຂຶ້ນ ແລະ ຫລຸດລົງຂອງສັດລ້ຽງຂອງຊາວກະສິກອນ ຜູ້ບໍ່ໄດ້ເຂົ້າຮ່ວມໂຄງການ. ໃນປີ 2001 ປະຊາຊົນຜູ້ປູກສາລີດ້ວຍຕົນເອງຈຳນວນ 17 ຄອບຄົວ ມີສັດລ້ຽງໂດຍສະເລ່ຍຕໍ່ຄອບຄົວຄື: ໝູ 2ໂຕ, ເປັດ 6 ໂຕ ແລະ ໄກ່ 29 ໂຕ ແລະ ໃນປີ 2005 ສັດລ້ຽງຂອງເຂົາເຈົ້າ ສະເລ່ຍຕໍ່ຄອບຄົວມີຄື: ໝູ 3ໂຕ, ໄກ່ 42 ໂຕ ແລະ ເປັດ 3ໂຕ. ນັບແຕ່ ປີ 2001- 2005 ອັດຕາການເພີ່ມຂຶ້ນ ແລະ ຫລຸດລົງ ຂອງສັດລ້ຽງ ຂອງພາກສ່ວນນອກໂຄງການ ສະເລ່ຍແລ້ວ ໝູເພີ່ມຂຶ້ນ 50% ແລະ ໄກ່ 45%, ແຕ່ວ່າ ຈຳນວນເປັດແມ່ນຫລຸດລົງເຖິງ 50%, ສາເຫດທີ່ເປັດມີຈຳນວນຫລຸດລົງ ແມ່ນຍ້ອນການລະບາດຂອງພະຍາດ (ຕາຍຫ່າ). ແຕ່ເມື່ອມາສັງເກດເບິ່ງແລ້ວ ສັດລ້ຽງລະຫວ່າງສອງພາກສ່ວນ ແມ່ນເຫັນໄດ້ວ່າເປີເຊັນການເພີ່ມຂຶ້ນຂອງສັດລ້ຽງຂອງພາກສ່ວນເຂົ້າຮ່ວມໂຄງການ ແມ່ນມີເປັນເຊັນການເພີ່ມຂຶ້ນດີກວ່າສັດທຸກຊະນິດ ທີ່ໃຊ້ສາລີເກືອ ແມ່ນມີການເພີ່ມຂຶ້ນປະມານໜຶ່ງເທົ່າໂຕ. ສາເຫດທີ່ເຮັດໃຫ້ສັດລ້ຽງຂອງພາກສ່ວນດັ່ງກ່າວນີ້ເພີ່ມຂຶ້ນ ແມ່ນຍ້ອນໄດ້ຮັບຄຳແນະນຳຈາກວິຊາການຢ່າງໃກ້ຊິດ ໃນການໃຫ້ອາຫານສັດ ໂດຍໃຊ້ສາລີເປັນອາຫານຫລັກໃຫ້ແກ່ສັດລ້ຽງ.

# 5. ເທັກນິກການຜະລິດ

## 5.1. ແນວພັນສາລີ

ແນວພັນສາລີປູກໃນໂຄງການ ຂອງຄອບຄົວຊາວກະສິກອນໃນຈຳນວນ 17 ຄອບຄົວ ໄດ້ມີການໃຊ້ແນວພັນປັບປຸງ ຫລື ແນວພັນລູກປະສົມລາວ-ຫວຽດ ເຖິງ 76% ແລະ ແນວພັນພື້ນເມືອງ ຈຳນວນ 24%, ຊຶ່ງສະແດງອອກ ດັ່ງຕາຕະລາງ ທີ 9.

ແນວພັນສາລີທີ່ຊາວກະສິກອນທັງສອງພາກສ່ວນຊົມໃຊ້ ແມ່ນມີຂໍ້ແຕກຕ່າງກັນຕາມເທັກນິກຂອງໃຜລາວ, ສ່ວນພາກສ່ວນທີ່ເຂົ້າຮ່ວມໂຄງການກໍ່ຈະໄດ້ຮັບຄຳແນະນຳ ຈາກພາກສ່ວນວິຊາການຂອງໂຄງການ, ແຕ່ວ່າພາກສ່ວນທີ່ບໍ່ເຂົ້າຮ່ວມໂຄງການ ກໍ່ອາໃສແນວພັນພື້ນບ້ານ ທີ່ໄດ້ເກັບຮັກສາໄວ້ ຫລື ແລກປ່ຽນແນວພັນນຳເພື່ອນບ້ານໃກ້ຄຽງມາປູກ. ຊຶ່ງສັງເກດເຫັນໄດ້ວ່າ: ພາກສ່ວນເຂົ້າຮ່ວມໂຄງການ ໄດ້ນຳໃຊ້ແນວພັນສ່ວນຫລາຍ ແມ່ນແນວພັນປັບປຸງ ແລະ ອີກພາກສ່ວນໜຶ່ງ, ກົງກັນຂ້າມ ແມ່ນໄດ້ນຳໃຊ້ແນວພັນພື້ນບ້ານຫລາຍກວ່າ.

**ຕາຕະລາງທີ 9: ແນວພັນສາລີຂອງຊາວກະສິກອນໃນໂຄງການ**

| ບ້ານ | ພາກສ່ວນເຂົ້າຮ່ວມໂຄງການ | | ພາກສ່ວນບໍ່ໄດ້ເຂົ້າຮ່ວມໂຄງການ | |
|---|---|---|---|---|
| | ພັນພື້ນເມືອງ (ກລ) | ພັນປັບປຸງ (ກລ) | ພັນພື້ນເມືອງ (ກລ) | ພັນປັບປຸງ (ກລ) |
| ຫ້ວຍມັນ | 3 | 34 | 65 | - |
| ທ່າໂພ | 30 | 69 | 19 | 17 |
| ສະເລ່ຍຕໍ່ເຮັກຕາ | 4 | 14 | 19 | 4 |

*(ແຫລ່ງຂໍ້ມູນຈາກ: ການສຳຫລວດຕົວຈິງ, 2006)*

ຈາກຕາຕະລາງ ທີ 9 ນີ້ ຈະເຫັນໄດ້ວ່າ ພາກສ່ວນຊາວກະສິກອນຜູ້ເຂົ້າຮ່ວມໂຄງການນຳໃຊ້ແນວພັນປັບປຸງທັງໝົດເທົ່າກັບ 76% ແລະ ແນວພັນພື້ນເມືອງມີພຽງແຕ່ 24% ເທົ່ານັ້ນ. ເຫດຜົນຊາວກະສິກອນທີ່ໃຊ້ແນວພັນປັບປຸງຫລາຍ ກໍ່ແມ່ນວ່າ ນັກວິຊາການໄດ້ແນະນຳການທົດລອງ ແນວພັນໃໝ່. ການຊຳລະຄ່າແນວພັນ ແມ່ນຈ່າຍຄືນພາຍຫລັງເກັບກູ້ຜົນຜະລິດ, ການຈ່າຍແນວພັນຄືນແມ່ນຈ່າຍໃຫ້ແກ່ພະນັກງານວິຊາການເມືອງ ຜູ້ຮັບຜິດຊອບວຽກການທົດລອງນີ້, ເພື່ອຊື້ແນວພັນໃຫ້ຜູ້ໃໝ່ ສຳລັບທຳການທົດລອງໃນປີຕໍ່ໄປ. ສາລີພັນປັບປຸງດັ່ງກ່າວ ເມື່ອເອົາມາເກືອສັດກໍ່ຈະເຮັດໃຫ້ສັດຕຸ້ຍພີ ແລະ ເວລາຂາຍແມ່ນໄດ້ລາຄາດີ. ແນວພັນພື້ນເມືອງທີ່ຊາວກະສິກອນປູກ ແມ່ນປູກໄວ້ເພື່ອໃຊ້ເປັນອາຫານໃຫ້ແກ່ຄອບຄົວ ແລະ ໃຊ້ເປັນແນວພັນ ໃນປີຕໍ່ໄປ.

ຈຳນວນຄອບຄົວຊາວກະສິກອນນອກໂຄງການ ມີຈຳນວນ 17 ຄອບຄົວ, ແນວພັນທີ່ໃຊ້ສ່ວນຫລາຍແມ່ນແນວພັນພື້ນເມືອງ ຊຶ່ງໃຊ້ເຖິງ 83% ແລະ ແນວພັນປັບປຸງຈຳນວນເລັກໜ້ອຍ ພຽງແຕ່ 17% ເທົ່ານັ້ນ (ຈາກຕາຕະລາງ ທີ 9). ອີກເຫດຜົນໜຶ່ງ ທີ່ປະຊາຊົນນຳໃຊ້ແນວພັນປັບປຸງ

ກໍ່ແມ່ນຢາກທົດລອງແນວພັນໃໝ່ ແລະ ເຂົາເຈົ້າຄິດວ່າຈະໄດ້ຜົນຜະລິດ ສູງກວ່າແນວພັນພື້ນເມືອງ. ແຕ່ກໍ່ຍັງມີບັນຫາວ່າ ແນວພັນປັບປຸງນັ້ນລາຄາສູງກວ່າແນວພັນພື້ນເມືອງ. ດັ່ງນັ້ນ, ປະຊາຊົນຈຶ່ງບໍ່ຢາກຊື້ ເຂົາເຈົ້າຄິດວ່າໃຊ້ແນວພັນໃດກໍ່ໃຊ້ໄດ້ຄືກັນ. ແຕ່ເຖິງຢ່າງໃດກໍ່ຕາມ ເຂົ້າເຈົ້າພັດຍັງມີການລົງທຶນໃນການຊື້ອຸປະກອນທີ່ຈຳເປັນ ເຂົ້າໃນການຜະລິດເຊັ່ນ: ຈົກ, ຊ້ອນ, ແວກ ແລະ ພ້າ.

ຈາກຕາຕະລາງທີ 9 ເມື່ອລວມແລ້ວ ຄອບຄົວຊາວກະສິກອນໃນໂຄງການ ແມ່ນໃຊ້ແນວພັນທັງໝົດ ໂດຍສະເລ່ຍຕໍ່ເຮັກຕາ ແມ່ນ 18 ກິໂລຕໍ່ເຮັກຕາ, ຊຶ່ງໄດ້ຜົນຜະລິດແມ່ນ 815 ກິໂລຕໍ່ເຮັກຕາ. ສະແດງວ່າໂດຍສະເລ່ຍແລ້ວແນວພັນ 1 ກິໂລ ໄດ້ຜົນຜະລິດເທົ່າ 45 ກິໂລ. ສ່ວນຊາວກະສິກອນນອກໂຄງການ ແມ່ນໃຊ້ແນວພັນທັງໝົດ ໂດຍສະເລ່ຍຕໍ່ເຮັກຕາ ແມ່ນ 23 ກິໂລຕໍ່ເຮັກຕາ, ໄດ້ຜົນຜະລິດແມ່ນ 924 ກິໂລຕໍ່ເຮັກຕາ. ສະແດງວ່າໂດຍສະເລ່ຍແລ້ວແນວພັນ 1 ກິໂລໄດ້ຜົນຜະລິດເທົ່າ 40 ກິໂລ.

## 5.2. ໄລຍະຫ່າງການປູກ

ໄລຍະຫ່າງການປູກສາລີ ຂອງຄອບຄົວຊາວກະສິກອນໃນໂຄງການ ແມ່ນໄດ້ປະຕິບັດຕາມ ວິຊາການຂອງໂຄງການຄື: ໄລຍະຫ່າງລະຫວ່າງແຖວແມ່ນ 70 - 80 ຊັງຕີແມັດ ແລະ ໄລຍະຫ່າງລະຫວ່າງຕົ້ນແມ່ນ 25 - 30 ຊັງຕີແມັດ. ຊາວກະສິກອນໄດ້ຮັບຄຳແນະນຳຈາກວິຊາການ ສູນຄົ້ນຄວ້າກະສິກຳ ແລະ ວິຊາການໂຄງການຍ່ອຍ ຄົ້ນຄວ້າລະບົບການຜະລິດກະສິກຳ. ການປູກໃນລັກສະນະແນະນຳຂອງໂຄງການ ແມ່ນງ່າຍດາຍ, ສະດວກໃນເວລາໃສ່ຝຸ່ນ ແລະ ເສຍຫຍ້າ. ອີກຢ່າງໜຶ່ງ ໄລຍະຫ່າງການປູກ ຂອງຄອບຄົວຊາວກະສິກອນນອກໂຄງການ ແມ່ນປະຕິບັດຕາມແບບຂອງປະຊາຊົນເອງ ຄືເຮັດແບບປະຖົມປະຖານ ຫລື ກະປະມານເອົາ. ດັ່ງນັ້ນ, ຈຶ່ງເຮັດໃຫ້ການບົວລະບັດຮັກສາ, ໃສ່ຝຸ່ນ ແລະ ເສຍຫຍ້າແມ່ນພົບກັບຄວາມຫຍຸ້ງຍາກ.

## 5.3. ການບົວລະບັດ

ສຳລັບການໃສ່ຝຸ່ນຂອງທັງສອງພາກສ່ວນ (ໃນ ແລະ ນອກໂຄງການ) ປະຊາຊົນແມ່ນຍັງບໍ່ທັນໄດ້ເອົາ ໃຈໃສ່ ຕໍ່ກັບບັນຫາດັ່ງກ່າວ. ຊຶ່ງມັນສະແດງ ອອກໃນການນຳໃຊ້ຝຸ່ນຄອກ ແລະ ຝຸ່ນເຄມີແມ່ນຍັງບໍ່ທັນມີຢ່າງຫລວງຫລາຍ, ມີພຽງແຕ່ 3-4 ຄອບຄົວຈາກພາກສ່ວນນອກໂຄງການ ເທົ່ານັ້ນທີ່ໄດ້ນຳໃຊ້ຝຸ່ນຄອກປັບປຸງສວນສາລີຂອງພວກເຂົາ. ສ່ວນໃຫຍ່ມີແຕ່ປູກ ແລ້ວກໍ່ປະໃຫ້ໃຫຍ່ເອງຕາມທຳມະຊາດ. ດັ່ງນັ້ນ, ຈຶ່ງເປັນສາເຫດສຳຄັນອີກປະການໜຶ່ງ ທີ່ເຮັດໃຫ້ຜົນຜະລິດບໍ່ໄດ້ຮັບຜົນດີເທົ່າທີ່ຄວນ.

ຜ່ານມາປະຊາຊົນຍັງບໍ່ທັນຮູ້ຈັກ ການນຳໃຊ້ຢາປາບສັດຕູພືດ, ປະຊາຊົນມີແຕ່ກຳຈັດສັດຕູພືດແບບທຳມະຊາດເຊັ່ນ: ເມື່ອເຫັນແມງໄມ້ ຫລື ບົ້ງກິນສາລີ ກໍ່ຈະຂ້າເລີຍ (ສາລີຍັງອ່ອນ). ຖ້າ

ບໍ່ເຫັນແລ້ວກໍ່ແລ້ວໄປ, ປະຊາຊົນບາງຄົນກໍ່ປ່ອຍໃຫ້ມັນທຳລາຍ ໂດຍບໍ່ໄດ້ຊອກວິທີທາງປ້ອງກັນໃດໆເລີຍ. ທັງນີ້ກໍ່ເພາະວ່າ ປະຊາຊົນຍັງບໍ່ທັນມີຄວາມຮູ້ ໃນການນຳໃຊ້ສານເຄມີ ເພື່ອປາບສັດຕູພືດ.

## 6. ບັນຫາ ແລະ ອຸປະສັກໃນການປູກສາລີ

### 6.1. ສັດຕູພືດ ແລະ ແມງໄມ້

ໃນການປູກສາລີຂອງຄອບຄົວຊາວກະສິກອນທັງສອງພາກສ່ວນ (ໃນ ແລະ ນອກໂຄງການ) ສັດຕູພືດສ່ວນໃຫຍ່ທີ່ພົບ ແມ່ນໜູກິນໃນເວລາປູກສາລີທຳອິດ, ຕອນຝັກຍັງອ່ອນ ແລະ ເວລາທີ່ສາລີເປັນໝາກ, ນອກນັ້ນແມ່ນແມງໄມ້ກັດໃບ ແລະ ຍອດ. ຊຶ່ງເຮັດໃຫ້ຜົນຜະລິດຂອງຄອບຄົວຊາວກະສິກອນ ໄດ້ຮັບຜົນເສຍຫາຍເປັນຈຳນວນຫລວງຫລາຍ.

### 6.2. ແຮງງານ

ການນຳໃຊ້ແຮງງານ ຂອງຄອບຄົວຊາວກະສິກອນທັງສອງບ້ານ ແມ່ນໄດ້ນຳໃຊ້ແຮງງານ ເຂົ້າໃນການຜະລິດ ແລະ ມີການຈ້າງແຮງງານຫລາຍເກີນໄປ, ໂດຍບໍ່ຄຳນຶງເຖິງປະສິດທິພາບ ຂອງແຮງງານ. ແຕ່ບາງຄອບຄົວຊໍ້າພັດຂາດແຮງງານ ຈຶ່ງເຮັດໃຫ້ ການປະຕິບັດຕາມຂັ້ນຕອນຕ່າງໆ ຂອງການປູກສາລີ ຫລ້າຊ້າ ແລະ ບໍ່ທວງທັນກັບເວລາ ແລະ ບໍ່ທັນລະດູການ, ອັນເປັນສາເຫດ ເຮັດໃຫ້ຜົນຜະລິດຫລຸດລົງ ແລະ ເຮັດໃຫ້ຕົ້ນທຶນການຜະລິດສູງຂຶ້ນ.

### 6.3. ຂໍ້ມູນຂ່າວສານດ້ານການຕະຫລາດ

ການໄດ້ຮັບຂໍ້ມູນ-ຂ່າວສານ ດ້ານການຕະຫລາດຂອງປະຊາຊົນ ຍັງມີຂໍ້ຈຳກັດ. ເນື່ອງຈາກວ່າ ຊາວກະສິກອນຕ້ອງໄດ້ລໍຖ້າພໍ່ຄ້າມາເກັບຊື້. ດັ່ງນັ້ນ, ຈຶ່ງບໍ່ສາມາດກຳນົດເວລາທີ່ແນ່ນອນໄດ້. ເພາະສະນັ້ນ, ບາງຄັ້ງປະຊາຊົນ ຕ້ອງໄດ້ເກັບສາລີຂອງຕົນໄວ້ຫລາຍວັນ ຈຶ່ງເຮັດໃຫ້ການເກັບຜົນຜະລິດໄວ້ດົນນານນັ້ນ ມີບັນຫາຕາມມາຄື: ມອດເຈາະສາລີ , ເຊື້ອລາ, ແລະ ຈະເຮັດໃຫ້ລາຄາ ຂອງຜົນຜະລິດກໍ່ຕົກຕໍ່າ. ຜ່ານມາຍັງບໍ່ທັນມີພາກສ່ວນໃດ ເຂົ້າມາມີບົດບາດໃນການ ກະຈາຍຂໍ້ມູນຂ່າວສານທາງດ້ານການຕະຫລາດ. ດັ່ງນັ້ນ, ສຳລັບລາຄາແລ້ວ ແມ່ນພໍ່ຄ້າເປັນຜູ້ກຳນົດລາຄາ ເອົາເອງຈຶ່ງເຮັດໃຫ້ປະຊາຊົນມີຄວາມເສຍປຽບ ໃນການຕໍ່ລອງເລື່ອງລາຄາກັບພໍ່ຄ້າ ທີ່ມາເກັບຊື້.

### 6.4. ເທັກນິກຫລັງເກັບກ່ຽວ

ການແກະສາລີ ສ່ວນໃຫຍ່ແມ່ນແກະແບບທຳມະຊາດ, ຍັງບໍ່ທັນມີເຄື່ອງມືຊ່ວຍໃນການແກະ, ຈຶ່ງເຮັດໃຫ້ເສຍເວລາຫລາຍ ແລະ ໄດ້ຮັບປະລິມານໜ້ອຍ. ພ້ອມກັນນັ້ນ, ປະຊາຊົນຍັງບໍ່ທັນໄດ້ມີເຕົາອົບທີ່ທັນສະໃໝ. ປະຊາຊົນມີແຕ່ໃຊ້ວິທີທຳມະຊາດເຊັ່ນ: ຕາກແດດໃຫ້ແຫ້ງ ແລ້ວກໍ່ສົ່ງຂາຍ ຫລື ເກັບໄວ້ເກືອສັດ. ເນື່ອງຈາກວ່າປະຊາຊົນປູກສາລີສ່ວນໃຫຍ່ ແມ່ນປູກຂະໜາດນ້ອຍ ແລະ ການເກັບຮັກສາກໍ່ເກັບໄວ້ແບບທຳມະຊາດ, ເຊັ່ນຕົວຢ່າງວ່າ: ປະຊາຊົນມັດສາລີ ຕາກແຫ້ງໄວ້, ແລະ ຫລັງຈາກປັ່ນສາລີແລ້ວ ພວກເຂົາກໍ່ເກັບສາລີ ໃສ່ເປົາໄວ້ທີ່ເຮືອນຂອງເຂົາເຈົ້າ. ໂດຍທົ່ວໄປຊາວກະສິກອນບໍ່ມີສາງເກັບຮັກສາທີ່ໃຫຍ່ ແລະ ທັນສະໃໝ. ເພາະສະນັ້ນ, ຈຶ່ງເຮັດໃຫ້ສາລີເກີດເຊື້ອລາ, ມອດເຈາະ ແລະ ຕົກໂມະໄດ້ງ່າຍ.

### 6.5. ອຸປະສັກອື່ນໆ

ເນື່ອງຈາກວ່າ ເຂດເມືອງໂພນໄຊເປັນເຂດທຸລະກັນດານ ໂຄງລ່າງພື້ນຖານຍັງບໍ່ທັນໄດ້ຮັບການພັດທະນາ. ດັ່ງນັ້ນ, ການເຂົ້າສູ່ທ້ອງຖິ່ນດັ່ງກ່າວ ຈຶ່ງມີຄວາມລຳບາກ ໂດຍສະເພາະ ແມ່ນລະດູຝົນ. ໃນລະດູນີ້ ແມ່ນພົບກັບຄວາມຫຍຸ້ງຍາກເຊັ່ນ: ບາງບ່ອນມີດິນເຊາະເຈື່ອນ ແລະ ຖືກຕັດຂາດ. ດັ່ງນັ້ນ, ການໄປມາຫາສູ່ຂອງປະຊາຊົນໃນ ແລະ ນອກຕົວເມືອງຈຶ່ງພົບກັບຄວາມຫຍຸ້ງຍາກ. ນອກຈາກນີ້ ພາຍຫລັງການເກັບກ່ຽວ ປະຊາຊົນບໍ່ມີສາງເກັບມ້ຽນສາລີທີ່ດີ ເພື່ອເກັບມ້ຽນລໍຖ້າພໍ່ຄ້າມາຊື້. ບາງຄັ້ງກໍ່ເຮັດໃຫ້ຜົນຜະລິດຖືກແມງໄມ້ເຈາະ, ເກີດເຊື້ອລາ ຊຶ່ງເປັນຜົນກະທົບຕໍ່ຜົນຜະລິດຂອງເຂົາເຈົ້າ.

## 7. ສະຫຼຸບ ແລະ ຂໍ້ສະເໜີແນະ

### 7.1 ສະຫລຸບ

ຜ່ານການສຶກສາຢູ່ເມືອງໂພນໄຊ ໃນການສຶກສາເທັກນິກການປູກສາລີຂອງທັງສອງພາກສ່ວນ (ໃນ ແລະ ນອກໂຄງການ) ໂດຍສະເພາະແມ່ນໄດ້ຄັດເລືອກເອົາບ້ານເປົ້າໝາຍຂອງໂຄງການຄື: ບ້ານຫ້ວຍມັນ ແລະ ບ້ານ ທ່າໂພ. ໃນນັ້ນ ໄດ້ເລືອກເອົາຄອບຄົວຜູ້ເຂົ້າຮ່ວມ ໂຄງການ 17 ຄອບຄົວ ແລະ ຄອບຄົວທີ່ບໍ່ໄດ້ເຂົ້າຮ່ວມໂຄງການ 17 ຄອບຄົວ ໃນການສົມທຽບເທັກນິກຂອງທັງສອງ ພາກສ່ວນ ເພື່ອເຂົ້າໃຈເຖິງຄວາມສຳຄັນ ແລະ ຄຸນປະໂຫຍດຂອງການນຳໃຊ້ເທັກນິກ. ຜົນໄດ້ຮັບທີ່ຕາມມາ ກໍ່ແມ່ນເຮັດໃຫ້ປະຊາຊົນໄດ້ນຳໃຊ້ສາລີ ເພີ່ມຜົນຜະລິດຂອງຄອບຄົວເຊັ່ນ: ໃຊ້ເກືອສັດ, ເຊິ່ງເຫັນໄດ້ ຈາກສັດລ້ຽງຂອງເຂົາເຈົ້າເພີ່ມຂຶ້ນເລື້ອຍໆ. ໂດຍສະເພາະແມ່ນສັດລ້ຽງ ຂອງພາກສ່ວນເຂົ້າຮ່ວມການທົດລອງນຳໂຄງການການ. ນອກຈາກເກືອສັດແລ້ວ ພວກເຂົາກໍ່ໄດ້ແບ່ງຂາຍຈຳນວນໜຶ່ງ ເພື່ອເປັນລາຍຮັບໃຫ້ແກ່ຄອບຄົວ ໃນການແກ້ໄຂຊີວິດການເປັນຢູ່ຂອງເຂົາເຈົ້າ ໃຫ້ດີຂຶ້ນເທື່ອ

ລະກ້າວ. ເຖິງແມ່ນວ່າ ລາຍຮັບຈາກການຂາຍສາລີຂອງເຂົາເຈົ້າບໍ່ສູງ ແຕ່ກໍ່ສາມາດແກ້ໄຂຊີວິດການ ເປັນຢູ່ຂອງປະຊາຊົນໄດ້ໃນລະດັບໃດໜຶ່ງ.

ແຕ່ເຖິງຢ່າງໃດກໍ່ຕາມ ປະຊາຊົນທັງສອງພາກສ່ວນ ກໍ່ຍັງມີຂໍ້ແຕກຕ່າງກັນຄື: ດ້ານເທັກນິກ, ການນໍາໃຊ້ແຮງງານ ແລະອື່ນໆ. ສ່ວນປະຊາຊົນຜູ້ເຂົ້າຮ່ວມໂຄງການ ຍັງປະຕິບັດຕາມຂັ້ນຕອນຂອງຄໍາແນະນໍາຈາກພະນັກງານວິຊາການບໍ່ທັນໄດ້ດີ, ມັນສະແດງອອກໃຫ້ເຫັນ ໃນແບບຟອມສໍາພາດ. ພ້ອມກັນນັ້ນ ການບົວລະບັດຂອງປະຊາຊົນທັງສອງພາກສ່ວນ ແມ່ນບໍ່ໄດ້ເອົາໃຈໃສ່ ໃນການບົວລະບັດເທົ່າທີ່ຄວນ, ເຊິ່ງສະແດງອອກໃນການໃສ່ຝຸ່ນ, ການເສຍຫຍ້າ, ການນໍາໃຊ້ຢາປາບສັດຕູພືດ ແລະ ວິທີການສະກັດກັ້ນ ການທໍາລາຍຂອງສັດຕູພືດແມ່ນບໍ່ທັນມີ, ດັ່ງນັ້ນ, ຈຶ່ງເປັນອີກສາເຫດໜຶ່ງ ທີ່ເຮັດໃຫ້ຜົນຜະລິດ ຂອງປະຊາຊົນບໍ່ໄດ້ຮັບໝາກຜົນ.

ສໍາລັບປະຊາຊົນໃນໂຄງການ ເຫັນວ່າໄດ້ນໍາໃຊ້ແນວພັນປັບປຸງເກືອບທັງໝົດ. ນໍາໃຊ້ແນວພັນພື້ນເມືອງພຽງເລັກໜ້ອຍ ແລະ ອັດຕາແນວພັນສະເລ່ຍເທົ່າກັບ 18 ກິໂລ/ເຮັກຕາ. ສໍາລັບຄອບຄົວປະຊາຊົນຜູ້ບໍ່ໄດ້ເຂົ້າຮ່ວມໂຄງການ ສ່ວນໃຫຍ່ແມ່ນນໍາໃຊ້ແນວພັນພື້ນເມືອງ ແລະ ນໍາໃຊ້ແນວພັນສະເລ່ຍຫລາຍກວ່າຄື 23 ກິໂລ/ເຮັກຕາ. ສະແດງວ່າ ໂດຍສະເລ່ຍແລ້ວ ຄອບຄົວຊາວກະສິກອນໃນໂຄງການ ໃຊ້ແນວພັນ 1 ກິໂລ ໄດ້ຜົນຜະລິດເທົ່າ 45 ກິໂລ, ສ່ວນຊາວກະສິກອນນອກໂຄງການ ໂດຍສະເລ່ຍແລ້ວ ໃຊ້ແນວພັນ 1 ກິໂລ ໄດ້ຜົນຜະລິດເທົ່າ 40 ກິໂລ.

ຈາກການດໍາເນີນກິດຈະກໍາການປູກສາລີຂອງປະຊາຊົນທັງສອງພາກສ່ວນ, ສ່ວນຫລາຍແລ້ວຄອບຄົວຊາວກະສິກອນແມ່ນຈະດໍາເນີນປູກສາລີຕໍ່ ແຕ່ມີບາງຈໍານວນຄອບຄົວ ທີ່ຈະຢຸດເຊົາ, ຊຶ່ງຄອບຄົວຊາວກະສິກອນໃນໂຄງການ ແມ່ນມີ 3 ຄອບຄົວຈະຢຸດເຊົາ, ຍ້ອນວ່າ ຂາດແຮງງານ, ແນວພັນ ແລະ ເນື້ອທີ່ທໍາການຜະລິດບໍ່ພຽງພໍ. ມີ 14 ຄອບຄົວທີ່ຈະສືບຕໍ່ປູກສາລີ, ຖ້າທຽບເປັນເປີເຊັນແລ້ວ ແມ່ນເທົ່າ 82% ທີ່ຈະດໍາເນີນຕໍ່. ສ່ວນຄອບຄົວຊາວກະສິກອນນອກໂຄງການ ແມ່ນມີ 1 ຄອບຄົວທີ່ຈະຢຸດເຊົາ ແລະ 16 ຄອບຄົວທີ່ຈະສືບຕໍ່, ຖ້າທຽບເປັນເປີເຊັນແລ້ວ ແມ່ນເທົ່າ 94% ທີ່ຈະດໍາເນີນຕໍ່. ເວົ້າລວມແລ້ວ ຄອບຄົວຊາວກະສິກອນ ແມ່ນມີແນວໂນ້ມໃນການປູກສາລີ ເພີ່ມຂຶ້ນເລື້ອຍໆ.

ຜ່ານການສົມທຽບລະຫວ່າງລາຍຮັບ ແລະ ລາຍຈ່າຍຂອງທັງສອງພາກສ່ວນໄດ້ສະແດງໃຫ້ເຫັນວ່າ ການນໍາໃຊ້ປັດໃຈ ການນໍາເຂົ້າໃນການຜະລິດມີປະສິດຕິພາບກວ່າ ເຮັດໃຫ້ຕົ້ນທຶນໃນການຜະລິດຕໍ່າກວ່າ ແລະ ໄດ້ກໍາໄລສູງກວ່າ. ນີ້ມັນກໍ່ໝາຍວ່າ ມັນໄດ້ເພີ່ມລາຍຮັບໃຫ້ແກ່ຄອບຄົວໄດ້ດີກວ່າ.

**7. 2** ຂໍ້ສະເໜີແນະ

ຜ່ານການສຶກສາເທັກນິກການປູກສາລີນີ້ ພວກຂ້າພະເຈົ້າແມ່ນໄດ້ຮຽນຮູ້ ວິທີການປະຕິບັດກິດຈະກຳໃນການປູກສາລີ, ຮູ້ຈັກຄວາມສຳຄັນ ຂອງຜົນຜະລິດ, ເຫັນໄດ້ເທັກນິກການເພາະປູກສາລີ, ເຫັນໄດ້ວິທີການທົດລອງແນວພັນປັບປຸງ ທີ່ມີຜົນຕໍ່ກັບຜົນຜະລິດສາລີ. ນອກນັ້ນ, ຍັງສາມາດຮູ້ໄດ້ວິທີການນຳໃຊ້ສາລີເຂົ້າໃນການເກືອສັດຂອງຊາວກະສິກອນ ແລະ ຂາຍເປັນລາຍຮັບເສີມໃຫ້ແກ່ຄອບຄົວ, ເຮັດໃຫ້ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃນເຂດດັ່ງກ່າວດີຂຶ້ນເປັນກ້າວໆ.

ໃນນາມວິຊາການທີ່ຄົ້ນຄວ້າ ພວກເຮົາສາມາດວິເຄາະບັນຫາ, ອຸປະສັກ ແລະ ສາມາດສັງລວມຫຍໍ້ບັນຫາ ແລະ ຂໍ້ສະເໜີແນະໄດ້ດັ່ງຕາຕະລາງລຸ່ມນີ້:

| ບັນຫາ | ອຸປະສັກ | ການສະເໜີແນະ |
|---|---|---|
| ຜົນຜະລິດສາລີຕໍ່າ | ຍ້ອນບໍ່ມີການປັບປຸງດິນ | ພາກສ່ວນກະສິກຳເມືອງ ຫລື ໂຄງການຍ່ອຍ ຄົ້ນຄວ້າລະບົບການຜະລິດກະສິກຳ ຫາວິທີປູກພືດແບບ ປະສົມປະສານ ເພື່ອປັບປຸງດິນ, ພ້ອມແນະນຳການໃສ່ຝຸ່ນ ເພື່ອປັບປຸງດິນ. |
| ນຳໃຊ້ແນວພັນປັບປຸງ ແຕ່ໄດ້ຜົນຜະລິດໜ້ອຍກວ່າ | ຍ້ອນແນວພັນອາດບໍ່ເໝາະສົມກັບດິນເຂດດັ່ງກ່າວ | ສູນຄົ້ນຄວ້າກະສິກຳ ພາກເໜືອ ຫລື ໂຄງການຍ່ອຍຄົ້ນຄວ້າລະບົບການຜະລິດກະສິກຳ ຈະຕ້ອງຄົ້ນຄວ້າ ແລະ ທົດ ລອງແນວພັນໃໝ່ຕື່ມ ເພື່ອຊອກຫາຄວາມເໝາະສົມກັບສະພາບພື້ນທີ່ດັ່ງກ່າວ. |
| ເນື້ອທີ່ດິນຫລາຍກວ່າ ໄດ້ຜົນຜະລິດຕໍ່າກວ່າ. | ດິນບໍ່ດີ, ດິນເປືອມ ແລະ ຫີນ | ພາກສ່ວນໂຄງການຍ່ອຍຄົ້ນຄວ້າດິນ.<br>ຄວນມີການວິໃຈດິນກ່ອນປູກ |
| ລາຄາສາລີ ບໍ່ປົກກະຕິ | ການຕິດຕາມຂໍ້ມູນຂ່າວ ສານທາງດ້ານການຕະຫລາດ ແລະ ລາຄາອາດຍັງບໍ່ທັນມີ | ນາຍບ້ານ ຫລື ອຳນາດການປົກຄອງ ທ້ອງຖິ່ນ ດັ່ງກ່າວຫາວິທີ ຊອກຫາຂໍ້ມູນທາງດ້ານການຕະຫລາດ ແລະ ຕິດແທດກັບພໍ່ຄ້າ ທີ່ມາເກັບຊື້ສາລີຈາກບ້ານ. ພ້ອມກັນນັ້ນກໍ່ຕ້ອງສ້າງໃຫ້ຜູ້ໃດຜູ້ໜຶ່ງພາຍໃນບ້ານຂອງຕົນ ເພື່ອເຂົ້າໄປໃນເມືອງ ແລະ ເກັບກຳ ຂໍ້ມູນຂ່າວສານດ້ານລາຄາສິນຄ້າ ມາເຜີຍແຜ່ໃຫ້ບ້ານຂອງຕົນໄດ້ຮັບຮູ້ ເປັນປະຈຳແຕ່ລະ 1 ອາທິດ ຫລື 1 ເດືອນ. |
| ໄດ້ຮັບຄຳແນະນຳຈາກນັກວິຊາການແຕ່ວ່າຜົນຜະລິດຕໍ່າ | ແນະນຳບໍ່ເໝາະກັບພື້ນທີ່, ຫລື ບໍ່ປະຕິບັດຕາມການແນະນຳຂອງວິຊາການ | ພະນັກງານ ຜູ້ທົດລອງ (ສູນຄົ້ນຄວ້າກະສິກຳ ພາກເໜືອ ແລະ ໂຄງການຍ່ອຍຄົ້ນຄວ້າລະບົບຜະລິດ ກະສິກຳ) ລົງຕິດຕາມກວດກາ ຂັ້ນຕອນການທົດລອງ ແຕ່ຕົ້ນຈົນຮອດຜົນຜະລິດ. |

## ເອກະສານອ້າງອີງ


ໂຄງການຍ່ອຍຄົ້ນຄ້ວາລະບົບການຜະລິດກະສິກຳ (2006). ເທັກນິກກະສິກຳ ແລະ ປ່າໄມ້ ເຂດພູດອຍພາກເໜືອຂອງ ສ ປ ປ ລາວ. ສ ຄ ກ ປ: ນະຄອນຫລວງວຽງຈັນ.

ຄອນປານີ ດຸ່ນຜາດີ ແລະ ບຸນເນື່ອງ ດວງບຸບຜາ, (2005). ບົດລາຍງານປຽບທຽບການປະເມີນຜົນ ລະດັບຄວາມອຸດົມສົມບູນຂອງດິນໃນລະບົບການຜະລິດກະສິກຳ ແລະ ປ່າໄມ້. ສ ຄ ກ ປ: ນະຄອນຫລວງວຽງຈັນ.

Douangsavanh Linkham and Bounthong Bouahom (2005). Pathways out of Poverty Through Maize and Job’s Tear in Lao People’s Democratic Republic.ESCAP: Bangkok

Socio-Economic Research Component. (2003). Report on the Diagnostic Survey in Phonsay District, NAFRI, Vientiane.

Phouyyavong Khamphou and Deneil talje (2006). Case Study on Production and Market Conditions for Corn in Namor District, Oudomxay Province, NAFRI: Vientiane.